رئاسة الشؤون الدينية
بالمسجد الحرام والمسجد النبوي

ລາວ | لاو | الوَسَائِلُ المُفِيْدَةُ لِلحَيَاةِ السَّعِيْدَةِ

# ແນວທາງທີ່ເປັນປະໂຫຍດເພື່ອຊີວິດແຫ່ງຄວາມຜາສຸກ

ທ່ານອາຈານ ອັບດຸຣເຣາະຫ໌ມານ ບິນ ນາເຊັຣ ອັສ-ສະອູດີ
(ຂໍພຣະອົງຊົງເມດຕາທ່ານ)

الوَسَائِلُ المُفِيْدَةُ لِلحَيَاةِ السَّعِيْدَةِ

# ແນວທາງທີ່ເປັນປະໂຫຍດເພື່ອຊີ
# ວິດແຫ່ງຄວາມຜາສຸກ


الشَّيْخُ عَبْدُ الرَّحمَنِ بْنُ نَاصِرٍ السَّعْدِيُّ

رَحِمَهُ اللهُ

*ຂຽນໂດຍ*

*ທ່ານອາຈານ ອັບດຸຣເຣາະຫ໌ມານ ບິນ ນາເຊັຣ*
*ອັສ-ສະອູດີ (ຂໍພຣະອົງຊົງເມດຕາທ່ານ)*

بِسْمِ اللهِ الرَّحمَنِ الرَّحِيمِ

# ແນວທາງທີ່ເປັນປະໂຫຍດເພື່ອຊີວິດແຫ່ງຄວາມຜາສຸກ

## ຂຽນໂດຍ

## ທ່ານອາຈານ ອັບດຸຣເຣາະຫ໌ມານ ບິນ ນາເຊັຣ ອັສ-ສະອູດີ (ຂໍພຣະອົງຊົງເມດຕາທ່ານ)

## ບົດນຳ

ມວນການສັນລະເສີນທັງໝົດເປັນສິດຂອງອັລລໍຫ໌, ຂ້າພະເຈົ້າຂໍປະຕິຍານວ່າບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ພຽງພຣະອົງດຽວ ບໍ່ມີການຕັ້ງພາຄີໃດໆ ຮ່ວມກັບພຣະອົງ, ແລະ ຂໍປະຕິຍານວ່າທ່ານນະບີມຸຮໍາມັດເປັນບ່າວ ແລະ ຣໍຊູລຂອງພຣະອົງ, ຂໍອວຍພອນ ແລະ ຄວາມສັນຕິສຸກຈາກອັລລໍຫ໌ຈົ່ງມີແດ່ທ່ານ ພ້ອມດ້ວຍວົງຕະກູນ ແລະ ບັນດາມິດສະຫາຍຂອງທ່ານທັງຫຼາຍ.

ຕໍ່ຈາກນັ້ນ; ແທ້ຈິງແລ້ວຄວາມສະງົບນິ່ງຂອງຫົວໃຈ, ຄວາມສະຫງົບສຸກ, ຄວາມເບີກບານມ່ວນຊື່ນ ແລະ ການໝົດໄປຂອງຄວາມວິຕົກກັງວົນ ແລະ ຄວາມໂສກເສົ້າຕ່າງໆນັ້ນ, ລ້ວນເປັນສິ່ງທີ່ທຸກຄົນປາດຖະໜາ, ແລະ ດ້ວຍສິ່ງດັ່ງກ່າວ ຈຶ່ງເຮັດໃຫ້ໄດ້ຮັບການດໍາລົງຊີວິດທີ່ດີງາມ, ຄວາມຜາສຸກ ແລະ ຄວາມເບີກບານທາງຈິດໃຈກໍຈະສົມບູນຂຶ້ນ. ແລະ

ສຳລັບສິ່ງດັ່ງກ່າວນັ້ນ ມີປັດໄຈສາເຫດມາຈາກຫຼາຍດ້ານ ເຊັ່ນດ້ານສາສະໜາ, ດ້ານທຳມະຊາດ ແລະ ດ້ານການປະຕິບັດ, ເຊິ່ງມັນເປັນໄປບໍ່ໄດ້ທີ່ສາເຫດທັງໝົດເຫຼົ່ານີ້ຈະມາລວມກັນໄດ້ ນອກຈາກຈະເກີດຂຶ້ນກັບບັນດາຜູ້ສັດທາເທົ່ານັ້ນ, ສ່ວນຜູ້ອື່ນນອກເໜືອຈາກພວກເຂົາ, ເຖິງແມ່ນວ່າພວກເຂົາຈະໄດ້ຮັບມັນຈາກບາງດ້ານ ແລະ ບາງສາເຫດ ທີ່ບັນດາຜູ້ມີປັນຍາຂອງພວກເຂົາພາກພຽນພະຍາຍາມເພື່ອໃຫ້ໄດ້ມັນມາກໍຕາມ, ພວກເຂົາກໍຫຍັງຕົກລົ້ນໃນຫຼາຍ ໆ ດ້ານທີ່ມີປະໂຫຍດກວ່າ, ໝັ້ນຄົງກວ່າ ແລະ ດີງາມກວ່າ ທັງໃນສະພາບປັດຈຸບັນ ແລະ ໃນອະນາຄົດ.

ແຕ່ຢ່າງໃດກໍ່ຕາມ ຂ້າພະເຈົ້າຈະຂໍກ່າວໃນບົດຄວາມນີ້ ເຖິງສາເຫດບາງປະການທີ່ນຳໄປສູ່ເປົ້າໝາຍອັນສູງສົ່ງ, ຊຶ່ງເປັນສິ່ງທີ່ທຸກຄົນຕ່າງກໍປາດຖະໜາ ແລະ ສະແຫວງຫາ.

ໃນໝູ່ພວກເຂົານັ້ນ ມີຜູ້ທີ່ປະສົບຜົນສຳເລັດເປັນສ່ວນໃຫຍ່ ຈຶ່ງໄດ້ໃຊ້ຊີວິດຢ່າງມີຄວາມຜາສຸກ ແລະ ສິ່ງດີງາມ, ແລະ ມີຜູ້ທີ່ລົ້ມເຫຼວໃນທຸກ ໆ ດ້ານ ຈຶ່ງໄດ້ໃຊ້ຊີວິດທີ່ເຕັມໄປດ້ວຍຄວາມທຸກທໍລະມານ, ແລະ ກໍມີຜູ້ທີ່ຢູ່ລະຫວ່າງກາງ, ເຊິ່ງຂຶ້ນຢູ່ກັບວ່າພວກເຂົາໄດ້ຮັບຄວາມສຳເລັດໃນລະດັບໃດ. ແທ້ຈິງ ອັລລໍຫ໌ຄືຜູ້ປະທານຄວາມສຳເລັດ ແລະ ເປັນຜູ້ທີ່ຖືກຂໍຄວາມຊ່ວຍເຫລືອໃນທຸກໆການງານທີ່ດີ ແລະ ໃນການປັດເປົ່າທຸກ ໆ ຄວາມຊົ່ວຮ້າຍ.

## ບົດຮຽນ: ການສັດທາ ແລະ ການກະທຳຄວາມດີງາມ

ແລະ ສາເຫດທີ່ຍິ່ງໃຫຍ່ທີ່ສຸດ, ເຊິ່ງເປັນຕົ້ນຕໍ ແລະ ຮາກຖານຂອງມັນກໍຄື ການສັດທາ ແລະ ການປະຕິບັດການງານອັນດີງາມ, ດັ່ງທີ່ພຣະອົງອັລລໍຫ໌ ຕາອາລາ ໄດ້ກ່າວໄວ້ວ່າ:

﴿مَنۡ عَمِلَ صَٰلِحٗا مِّن ذَكَرٍ أَوۡ أُنثَىٰ وَهُوَ مُؤۡمِنٞ فَلَنُحۡيِيَنَّهُۥ حَيَوٰةٗ طَيِّبَةٗۖ وَلَنَجۡزِيَنَّهُمۡ أَجۡرَهُم بِأَحۡسَنِ مَا كَانُواْ يَعۡمَلُونَ ٩٧﴾

(ຜູ້ໃດປະຕິບັດຄວາມດີງາມ ບໍ່ວ່າຈະເປັນເພດຊາຍ ຫຼື ເພດຍິງກໍ່ຕາມ ໂດຍທີ່ເຂົາເປັນຜູ້ສັດທາ, ເຮົາຈະໃຫ້ເຂົາມີຊີວິດທີ່ດີ ແລະ ແນ່ນອນເຮົາຈະຕອບແທນພວກເຂົາ ເຊິ່ງລາງວັນສຳຫຼັບຂອງພວກເຂົາ ທີ່ດີຍິ່ງກວ່າທີ່ພວກເຂົາໄດ້ເຄີຍກະທຳ). [ຊູເຣາະຫ໌ ອັລນັມລຸ: 97].

ດັ່ງນັ້ນ ພຣະອົງຜູ້ຊົງສູງສົ່ງຈຶ່ງໄດ້ດຳລັດ ແລະ ໄດ້ຊົງສັນຍາແກ່ຜູ້ທີ່ສັດທາທີ່ປະກອບຄຸນງາມຄວາມດີ, ວ່າຈະໃຫ້ມີຊີວິດທີ່ດີງາມໃນໂລກນີ້, ແລະ ຈະໄດ້ຮັບການຕອບແທນອັນດີງາມທັ້ງໃນໂລກນີ້ ແລະ ໃນໂລກໜ້າ.

ແລະ ສາເຫດຂອງສິ່ງດັ່ງກ່າວນັ້ນແມ່ນຊັດເຈນ, ເພາະແທ້ຈິງແລ້ວ ບັນດາຜູ້ສັດທາຕໍ່ອັລລໍຫ໌ດ້ວຍການສັດທາທີ່ຖືກຕ້ອງ, ທີ່ສົ່ງຜົນໃຫ້ເກີດການງານທີ່ດີງາມ ເພື່ອປັບປຸງແກ້ໄຂຫົວໃຈ,

ຈະລິຍະທຳ, ທັ້ງໂລກນີ້ ແລະ ໂລກໜ້າ, ພວກເຂົານັ້ນມີຫຼັກການ ແລະ ຮາກຖານທີ່ໃຊ້ຮັບມືກັບທຸກສິ່ງທີ່ເຂົ້າມາປະສົບກັບພວກເຂົາ, ທັງຈາກສາເຫດແຫ່ງຄວາມສຸກ ແລະ ຄວາມເບີກບານຫົວໃຈ, ແລະ ສາເຫດແຫ່ງຄວາມກັງວົນ, ຄວາມທຸກໃຈ ແລະ ຄວາມໂສກເສົ້າ.

ພວກເຂົາພົບເຈີຄວາມໂປດປານ ແລະ ຄວາມສຸກສຳລານຕ່າງໆ ດ້ວຍການຍອມຮັບ, ການສະແດງຄວາມຂອບໃຈ, ແລະ ນຳມັນມາໃຊ້ໃນສິ່ງທີ່ເປັນປະໂຫຍດ. ດັ່ງນັ້ນ ເມື່ອພວກເຂົາໃຊ້ຄວາມສຸກເຫຼົ່ານັ້ນ ໃນແນວທາງນີ້, ກໍ່ຈະເກີດແກ່ພວກເຂົາ ເຊິ່ງຄວາມປິຕິຍິນດີຈາກການໄດ້ຮັບມັນ, ຄວາມຫວັງທີ່ຈະໄດ້ຄົງຢູ່ ແລະ ໄດ້ຮັບຄວາມຈຳເລີນຈາກມັນ ແລະ ຄວາມຫວັງໃນຜົນລະບຸນຂອງຜູ້ທີ່ສະແດງຄວາມຂອບໃຈ, ເຊິ່ງທັ້ງໝົດນີ້ ເປັນຜົນລັບອັນຍິ່ງໃຫຍ່ທີ່ເໜືອກວ່າຄວາມສຸກສຳລານທາງໂລກ ດ້ວຍຄວາມດີງາມ ແລະ ຄວາມຈຳເລີນຂອງມັນ, ອັນເປັນພາກຜົນທີ່ໄດ້ຮັບຈາກສິ່ງດັ່ງກ່າວມາແຕ່ຕົ້ນ.

ແລະ ພວກເຂົາຮັບມືກັບອຸປະສັກ, ຄວາມທຸກຍາກ, ຄວາມກັງວົນໃຈ ແລະ ຄວາມໂສກເສົ້າ ດ້ວຍການຕໍ່ສູ້ຕ້ານໃນສິ່ງທີ່ພວກເຂົາສາມາດຕ້ານໄດ້, ຜ່ອນເບົາໃນສິ່ງທີ່ພວກເຂົາສາມາດຜ່ອນເບົາໄດ້, ແລະ ອົດທົນຢ່າງດີງາມຕໍ່ສິ່ງທີ່ບໍ່ສາມາດຫຼີກລ້ຽງໄດ້. ດ້ວຍເຫດນີ້

ພວກເຂົາຈຶ່ງໄດ້ຮັບຈາກຜົນຂອງຄວາມທຸກອຸປະສັກນັ້ນຄື ປະສົບການທີ່ເປັນປະໂຫຍດ, ຄວາມເຂັ້ມແຂງ, ແລະ ຜົນຈາກການອົດທົນ
ພ້ອມມຸ່ງຫວັງຕໍ່ລາງວັນຕອບແທນຈາກອັລລໍຫ໌, ຈົນກະທັ່ງຄວາມທຸກອຸປະສັກຕ່າງ ໆ ເຫຼົ່ານັ້ນ ຄ່ອຍໆ ຈາງຫາຍໄປ, ແລະ ຈະມີຄວາມສຸກ ແລະ ຄວາມຫວັງທີ່ດີງາມເຂົ້າມາແທນທີ່ ແລະ ພ້ອມກັບການມຸ່ງຫວັງໃນຄວາມໂປດປານຂອງອັລລໍຫ໌ ແລະ ຜົນຕອບແທນຂອງພຣະອົງ, ດັ່ງທີ່ທ່ານນະບີ ຊັລລັລລໍຮຸ ອະໄລຮິ ວະຊັລລໍາ ໄດ້ກ່າວເຖິງເລື່ອງນີ້ໃນຫະດີດທີ່ເຊື່ອຖື ລໍຮິຫ໌ ວ່າ:

«عَجَبًا لِأَمْرِ الْمُؤْمِنِ، إِنَّ أَمْرَهُ كُلَّهُ خَيْرٌ، إِنْ أَصَابَتْهُ سَرَّاءُ شَكَرَ فَكَانَ خَيْرًا لَهُ، وَإِنْ أَصَابَتْهُ ضَرَّاءُ صَبَرَ فَكَانَ خَيْرًا لَهُ، وَلَيْسَ ذَلِكَ لِأَحَدٍ إِلَّا لِلْمُؤْمِنِ».

(ເປັນທີ່ແປກຍິ່ງສໍາຫຼັບການງານຂອງມຸມິນຜູ້ສັດທາ, ທີ່ແທ້ຈິງກິດຈະການຂອງລາວທັງໝົດເປັນເລື່ອງປະເສີດ, ເມື່ອຄວາມສຸກປະສົບແກ່ລາວ ລາວກໍ່ຂອບໃຈຕໍ່ອັລລໍຫ໌ ນັ້ນເປັນການດີກວ່າສໍາຫຼັບລາວ, ແລະ ເມື່ອລາວປະສົບຄວາມທຸກຍາກ ລາວກໍ່ອົດທົນ ນັ້ນເປັນການດີກວ່າສໍາຫຼັບລາວ, ແລະ ສິ່ງດັ່ງກ່າວນີ້ຈະບໍ່ມີສໍາຫຼັບຜູ້ໃດນອກຈາກມຸມິນ-ຜູ້ສັດທາ). ບັນທຶກໂດຍມຸສລິມ.

ດັ່ງນັ້ນ ທ່ານນະບີ ﷺ ໄດ້ແຈ້ງໃຫ້ຊາບວ່າ ແທ້ຈິງຜູ້ສັດທານັ້ນຜົນຕອບແທນ, ຄວາມດີງາມ ແລະ ໝາກຜົນຈາກການງານຂອງລາວຈະເພີ່ມທະວີຄູນຂຶ້ນ ໃນທຸກ ໆ ສິ່ງທີ່ປະສົບກັບລາວ ບໍ່ວ່າຈະເປັນຄວາມສຸກ ຫຼື

ຄວາມທຸກຍາກລຳບາກ; ດ້ວຍເຫດນີ້, ທ່ານຈະພົບເຫັນຄົນສອງຄົນທີ່ປະສົບກັບເຫດການອັນດຽວກັນ ບໍ່ວ່າຈະເປັນເລື່ອງດີ ຫຼື ເລື່ອງຮ້າຍກໍ່ຕາມ, ແຕ່ພວກເຂົາທັງສອງຈະມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍໃນການຍອມຮັບຕໍ່ມັນ, ແລະນັ້ນກໍ່ຂຶ້ນຢູ່ກັບຄວາມແຕກຕ່າງຂອງພວກເຂົາໃນເລື່ອງຄວາມເຊື່ອສັດທາ ແລະ ການປະກອບກິດຈະການງານຄວາມດີງາມ. ຜູ້ທີ່ຖືກພັນລະນາດ້ວຍສອງຄຸນລັກສະນະດັ່ງນີ້; ກໍຄືລາວຈະຕອບຮັບຕໍ່ຄວາມດີ ແລະ ຄວາມຊົ່ວ "ດ້ວຍການຂອບໃຈ ແລະ ການອົດທົນ" ດັ່ງທີ່ໄດ້ກ່າວມາ, ດັ່ງນັ້ນ ຄວາມສຸກ ແລະ ຄວາມປິຕິຍິນດີກໍ່ຈະປະສົບເກີດຂຶ້ນແກ່ລາວ, ຄວາມວິຕົກກັງວົນ, ຄວາມໂສກເສົ້າ, ຄວາມອຶດອັດໃນຈິດໃຈ ແລະ ຄວາມທຸກທໍລະມານຂອງຊີວິດກໍ່ຈະຫາຍໄປ, ແລະ ລາວຈະມີຊີວິດທີ່ດີງາມຢ່າງສົມບູນໃນໂລກນີ້. ສ່ວນອີກຄົນຫນຶ່ງນັ້ນ ຈະໄດ້ຮັບສິ່ງທີ່ຕົນມັກດ້ວຍຄວາມອວດດີ, ໂອ້ອວດທະນົງຕົວ ແລະ ການລະເມີດຂອບເຂດຜ່າຝືນ. ດັ່ງນັ້ນ ມາລະຍາດຂອງລາວກໍຈະເສື່ອມເສຍໄປ ແລະ ລາວຈະຮັບເອົາມັນຄືກັບທີ່ສັດເດລະສານ ຮັບເອົາດ້ວຍຄວາມໂລບມາກ ແລະ ຄວາມຢ້ານກົວ, ເຖິງຢ່າງນັ້ນກໍຕາມ ຫົວໃຈຂອງລາວກໍບໍ່ມີຄວາມສະຫງົບ, ແຕ່ກັບຈະເຕັມໄປດ້ວຍຄວາມສັບສົນວຸ້ນວາຍໃນຫຼາຍ ໆ ດ້ານ;

ສັບສົນວຸ່ນວາຍຍ້ອນຄວາມຢ້ານວ່າສິ່ງທີ່ຕົນຮັກຈະສູນຫາຍໄປ, ຍ້ອນອຸປະສັກຕ່າງ ໆ ທີ່ມັກຈະເກີດຂຶ້ນ, ແລະ ຍ້ອນວ່າຈິດໃຈຂອງມະນຸດບໍ່ເຄີຍຢຸດນິ່ງ ແຕ່ຍັງຄົງປາຖະຫນາໃນສິ່ງອື່ນໆ ຢູ່ສະເໝີ ເຊິ່ງອາດຈະໄດ້ຮັບ ຫຼື ບໍ່ໄດ້ຮັບກໍຕາມ. ແລະ ເຖິງແມ່ນວ່າລາວຈະໄດ້ຮັບສິ່ງທີ່ປາຖະຫນານັ້ນແລ້ວ, ລາວກໍຍັງຄົງກັງວົນຈາກສາເຫດຕ່າງ ໆ ທີ່ກ່າວມາ. ແລະ ເມື່ອລາວປະເຊີນກັບສິ່ງທີ່ບໍ່ພໍໃຈ, ລາວກໍຈະຮັບມືກັບມັນດ້ວຍຄວາມກັງວົນ, ຄວາມທຸກໂສກ, ຄວາມຢ້ານກົວ ແລະ ຄວາມເບື່ອຫນ່າຍ. ດັ່ງນັ້ນ ບໍ່ຕ້ອງຖາມເລີຍວ່າລາວຈະປະສົບກັບຄວາມທຸກທໍລະມານໃນຊີວິດ, ພະຍາດທາງດ້ານຄວາມຄິດ ແລະ ທາງດ້ານປະສາດ, ແລະ ຄວາມຢ້ານກົວທີ່ອາດຈະນໍາພາລາວໄປສູ່ສະພາບທີ່ເລວຮ້າຍທີ່ສຸດ ແລະ ສິ່ງທີ່ວຸ້ນວາຍທີ່ສຸດ ເພາະວ່າລາວບໍ່ໄດ້ຫວັງໃນຜົນບຸນຕອບແທນໃດ ໆ ແລະ ບໍ່ມີຄວາມອົດທົນທີ່ຈະມາປອບປະໂລມ ແລະ ຜ່ອນເບົາຄວາມທຸກຂອງລາວໄດ້.

ທັງໝົດນີ້ ແມ່ນສິ່ງທີ່ສາມາດພິສູດໄດ້ຈາກປະສົບການຈິງ, ຕົວຢ່າງຫນຶ່ງໃນເລື່ອງນີ້, ເມື່ອເຮົາລອງພິຈາລະນາ ແລະ ນໍາໄປປຽບທຽບກັບສະພາບຂອງຜູ້ຄົນ, ເຮົາຈະເຫັນຄວາມແຕກຕ່າງອັນໃຫຍ່ຫຼວງລະຫວ່າງຜູ້ສັດທາທີ່ປະຕິບັດຕາມຄວາມສັດທາຂອງຕົນ ກັບຜູ້ທີ່ບໍ່ໄດ້ເປັນເຊັ່ນນັ້ນ. ນັ້ນກໍ່ຄື ສາສະຫນາໄດ້ສິ່ງເສີມຢ່າງແຮງກ້າໃຫ້ມີຄວາມພໍໃຈໃນປັດໄຈຍັ

ໆຊີບທີ່ອັລລໍຫ໌ປະທານໃຫ້, ແລະ ໃນສິ່ງທີ່ພຣະອົງໄດ້ປະທານໃຫ້ກັບບ່າວຂອງພຣະອົງ ຈາກຄວາມໂປດປານ ແລະ ຄວາມເມດຕາອັນຫຼາກຫຼາຍຂອງພຣະອົງ.

ສະນັ້ນ ຜູ້ສັດທາ ເມື່ອຖືກທົດສອບດ້ວຍຄວາມເຈັບປ່ວຍ ຫຼື ຄວາມທຸກຍາກ ຫຼື ສິ່ງອື່ນ ໆ ທີ່ຄ້າຍຄືກັນ ຈາກເຫດການຕ່າງ ໆ ທີ່ທຸກຄົນລ້ວນຕ້ອງປະເຊີນ, ແທ້ຈິງແລ້ວ ດ້ວຍຄວາມສັດທາຂອງລາວ ແລະ ຄວາມຍອມຮັບພໍພຽງ ແລະ ຄວາມພໍໃຈໃນສິ່ງທີ່ອັລລໍຫ໌ໄດ້ກຳນົດໃຫ້ແກ່ເຂົາ, ລາວກໍ່ຈະມີຄວາມສຸກສະບາຍໃຈ, ຫົວໃຈຂອງລາວຈະບໍ່ສະແຫວງຫາໃນສິ່ງທີ່ບໍ່ໄດ້ຖືກກຳນົດໄວ້ສຳລັບລາວ, ລາວຈະເບິ່ງຜູ້ທີ່ດ້ອຍກວ່າຕົນ ແລະ ບໍ່ເບິ່ງຜູ້ທີ່ເໜືອກວ່າຕົນ. ແລະ ບາງຄັ້ງຄວາມເບີກບານ, ຄວາມສຸກ ແລະ ຄວາມສະຫງົບສຸກຂອງລາວອາດຈະມີຫຼາຍກວ່າຜູ້ທີ່ໄດ້ຮັບທຸກສິ່ງທີ່ຕ້ອງການໃນໂລກນີ້ ຫາກແຕ່ວ່າເຂົາບໍ່ໄດ້ຮັບຄວາມພໍພຽງ.

ເຊັ່ນດຽວກັນ ທ່ານຈະພົບວ່າຜູ້ທີ່ບໍ່ມີການປະຕິບັດຕາມຫຼັກການແຫ່ງສັດທາ, ເມື່ອຖືກທົດສອບດ້ວຍຄວາມທຸກຍາກ ຫຼື ການສູນເສຍຄວາມຕ້ອງການບາງຢ່າງໃນໂລກນີ້, ລາວຈະຕົກຢູ່ໃນຄວາມທຸກທໍລະມານ ແລະ ຄວາມໂສກເສົ້າຢ່າງທີ່ສຸດ.

ແລະ ອີກຕົວຢ່າງໜຶ່ງ:

ເມື່ອມີເຫດການຂອງຄວາມຢ້ານກົວເກີດຂຶ້ນ ແລະ ຄວາມທຸກທໍລະມານຕ່າງ ໆ ໄດ້ເກີດຂຶ້ນກັບມະນຸດ, ທ່ານຈະພົບວ່າຜູ້ສັດທາທີ່ແທ້ຈິງນັ້ນ ມີຈິດໃຈທີ່ໜັກແໜ້ນ, ມີຈິດໃຈທີ່ສະຫງົບ, ສາມາດບໍລິຫານຈັດການກັບເຫດການທີ່ເກີດຂຶ້ນຢ່າງກະທັນຫັນນັ້ນໄດ້ດີດ້ວຍສຸດຄວາມສາມາດຂອງລາວ ທັງໃນດ້ານຄວາມຄິດ, ຄໍາເວົ້າ ແລະ ການກະທໍາ, ລາວໄດ້ກຽມຈິດໃຈຂອງຕົນເອງເພື່ອຮັບມືກັບຄວາມທຸກທໍລະມານທີ່ເກີດຂຶ້ນນີ້. ແລະ ສະພາວະການເຫຼົ່ານີ້ເຮັດໃຫ້ມະນຸດມີຄວາມສະຫງົບ ແລະ ເຮັດໃຫ້ຈິດໃຈຂອງລາວໜັກແໜ້ນ.

ສ່ວນຜູ້ທີ່ບໍ່ມີອີມານຄວາມເຊື່ອສັດທາຈະຢູ່ໃນສະພາບທີ່ກົງຄັນຂ້າມ, ເມື່ອປະເຊີນກັບຄວາມຢ້ານກົວ ຈິດໃຈຂອງລາວກໍກະວຸ້ນກະວາຍ, ເສັ້ນປະສາດຈະເຄັ່ງຕຶງ, ຄວາມຄິດຈະສັບສົນກະຈັດກະຈາຍ ແລະ ຖືກຄອບງໍາດ້ວຍຄວາມຫວາດຫວັ່ນ. ລາວຈະຕ້ອງປະເຊີນທັງຄວາມຢ້ານກົວຈາກພາຍນອກ ແລະ ຄວາມກັງວົນຈາກພາຍໃນທີ່ບໍ່ສາມາດອະທິບາຍອອກມາເປັນຄໍາເວົ້າໄດ້. ຄົນປະເພດນີ້ ຖ້າຫາກບໍ່ມີວິທີການຮັບມືບາງຢ່າງທີ່ຕ້ອງອາໄສການຝຶກຝົນຢ່າງໜັກແລ້ວ, ກໍາລັງຂອງພວກເຂົາກໍຈະລົ້ມສະຫຼາຍ ແລະ ເສັ້ນປະສາດກໍຈະເຄັ່ງຕຶງ ທັງນີ້ກໍເນື່ອງມາຈາກການຂາດອີມານການສັດທາ ເຊິ່ງເປັນສິ່ງທີ່ນໍາໄປສູ່ຄວາມອົດທົນ, ໂດຍສະເພາະໃນສະຖານະການທີ່ວິກິດ ແລະ

ໃນສະພາວະທີ່ໂສກເສົ້າ ແລະ ກະວຸ້ນກະວາຍໃຈ.

ຜູ້ດຳລົງແຫ່ງທັມ ແລະ ຜູ້ຊື່ອຊ້າ, ຜູ້ສັດທາ ແລະ ຜູ້ປະຕິເສດສັດທາ ຕ່າງກໍ່ມີສ່ວນຮ່ວມໃນການສະແຫວງຫາຄວາມກ້າຫານ ແລະ ສັນຊາດຕະຍານທີ່ຊ່ວຍບັນເທົາ ແລະ ຫລຸດຜ່ອນຄວາມຢ້ານກົວຄືກັນ, ແຕ່ທະວ່າຜູ້ສັດທາ (ມຸມິນ) ນັ້ນມີຄວາມໂດດເດັ່ນກວ່າ ດ້ວຍຄວາມເຂັ້ມແຂງໃນການສັດທາຂອງລາວ, ຄວາມອົດທົນຂອງລາວ, ການມອບໝາຍເຊື່ອໝັ້ນຕໍ່ອັລລໍຫ໌ ແລະ ການເພິ່ງພາພຣະອົງອັລລໍຫ໌, ແລະ ການຫວັງໃນຜົນຕອບແທນຈາກພຣະອົງ - ເຊິ່ງບັນດາການງານເຫຼົ່ານັ້ນ ທີ່ຈະຊ່ວຍເພີ່ມຄວາມກ້າຫານໃຫ້ແກ່ລາວ, ບັນເທົາຄວາມໜັກໜ່ວງຂອງຄວາມຢ້ານກົວ, ແລະ ເຮັດໃຫ້ຄວາມຍາກລຳບາກຕ່າງໆ ກາຍເປັນເລື່ອງງ່າຍດາຍສຳລັບລາວ, ດັ່ງທີ່ພຣະອົງໄດ້ຕຣັດໄວ້ວ່າ:

﴿...إِن تَكُونُواْ تَأۡلَمُونَ فَإِنَّهُمۡ يَأۡلَمُونَ كَمَا تَأۡلَمُونَۖ وَتَرۡجُونَ مِنَ ٱللَّهِ مَا لَا يَرۡجُونَ...﴾

(...ຫາກພວກເຈົ້າເຈັບປວດ ແທ້ຈິງພວກເຂົາກໍ່ເຈັບປວດເຊັ່ນດຽວກັບພວກເຈົ້າ ແລະພວກເຈົ້າມີຄວາມຫວັງຈາກອັລລໍຫ໌ ໃນສິ່ງທີ່ພວກເຂົາບໍ່ໄດ້ຫວັງ...) [ສູເຣາະຫ໌ ອັນນິສາ : 104]. ແລະ

ພວກເຂົາຈະໄດ້ຮັບການຊ່ວຍເຫຼືອສະໜັບສະໜູນອັນພິເສດ ຈາກອັລລໍຫ໌
ທີ່ຈະເຮັດໃຫ້ຄວາມຢ້ານກົວທັງຫຼາຍກະຈັດກະຈາຍໄປ. ພຣະອົງຊົງຕຣັດວ່າ:

﴿...وَٱصۡبِرُوٓاْۚ إِنَّ ٱللَّهَ مَعَ ٱلصَّٰبِرِينَ﴾

(ແລະພວກເຈົ້າຈົ່ງອົດທົນ, ແທ້ຈິງອັລລໍຫ໌ ຊົງຢູ່ຮ່ວມກັບບັນດາຜູ້ອົດທົນ) [ສູເຣາະຫ໌ ອັນຟານ : 46].

ການເຮັດດີຕໍ່ສິ່ງຖືກສ້າງ ທັ້ງຄຳເວົ້າ ແລະ ການກະທຳ ໃນບັນດາສາເຫດທີ່ຊ່ວຍກຳຈັດຄວາມໂສກເສົ້າ, ຄວາມກັງວົນ ແລະ ຄວາມວິຕົກກັງວົນຕ່າງໆ ນັ້ນກໍຄື: ການປະພຶດດີຕໍ່ສິ່ງຖືກສ້າງທັງຫຼາຍ ດ້ວຍຄຳເວົ້າ ແລະ ການກະທຳ, ຕະຫຼອດຈົນການເຮັດຄວາມດີໃນຮູບແບບຕ່າງ ໆ. ການກະທຳທັງໝົດນີ້ລ້ວນເປັນຄວາມດີ ແລະ ການກະທຳທີ່ດີງາມ, ເຊິ່ງດ້ວຍການກະທຳເຫຼົ່ານີ້ ອັລລໍຫ໌ຈະຊົງປັດເປົ່າຄວາມທຸກໂສກ ແລະ ຄວາມວິຕົກກັງວົນໃຈຕ່າງ ໆ ອອກໄປ ຈາກທັງຜູ້ທີ່ເປັນຄົນດີ ແລະ ຄົນຊົ່ວ ຕາມລະດັບການກະທຳຂອງພວກເຂົາ. ແຕ່ສຳລັບຜູ້ສັດທາແລ້ວ ພວກເຂົາຈະໄດ້ຮັບສ່ວນແບ່ງ ແລະ ຜົນຕອບແທນທີ່ສົມບູນທີ່ສຸດ, ແລະ ສິ່ງທີ່ເຮັດໃຫ້ພວກເຂົາພິເສດກວ່ານັ້ນກໍຄື ການປະພຶດດີຂອງພວກເຂົານັ້ນ ເກີດຂຶ້ນຈາກຄວາມບໍລິສຸດໃຈ ແລະ ການຫວັງໃນຜົນບຸນຕອບແທນຈາກພຣະອົງ.

ອັລລໍຫ໌ຈະຊົງເຮັດໃຫ້ການກະທຳຄວາມດີເປັນເລື່ອງງ່າຍ ສຳລັບເຂົາ ຍ້ອນຜົນຕອບແທນທີ່ເຂົາຫວັງຈະໄດ້ຮັບ, ແລະ

ພຣະອົງຈະຊົງປັດເປົ່າສິ່ງທີ່ບໍ່ດີອອກໄປຈາກເຂົາ ດ້ວຍຄວາມບໍລິສຸດໃຈ ແລະ ການຫວັງໃນຜົນບຸນຈາກພຣະອົງ. ອັລລໍຫ໌ ຊົງຕຣັດວ່າ:

﴿لَّا خَيْرَ فِي كَثِيرٍ مِّن نَّجْوَاهُمْ إِلَّا مَنْ أَمَرَ بِصَدَقَةٍ أَوْ مَعْرُوفٍ أَوْ إِصْلَاحٍ بَيْنَ ٱلنَّاسِ ۚ وَمَن يَفْعَلْ ذَٰلِكَ ٱبْتِغَآءَ مَرْضَاتِ ٱللَّهِ فَسَوْفَ نُؤْتِيهِ أَجْرًا عَظِيمًا ١١٤﴾

(ບໍ່ມີຄວາມດີໃນການສົນທະນາລັບ ໆ ສ່ວນຫຼາຍຂອງພວກເຂົາ ເວັ້ນເສຍແຕ່ຜູ້ທີ່ສັ່ງໃຫ້ມີການບໍລິຈາກທານ ຫຼື ເຮັດຄວາມດີ ຫຼື ໄກ່ເກ່ຍປະນີປະນອມລະຫວ່າງຜູ້ຄົນ. ແລະ ຜູ້ໃດທີ່ກະທຳເຊັ່ນນັ້ນ ເພື່ອສະແຫວງຫາຄວາມພໍພຣະໄທຂອງອັລລໍຫ໌ ດັ່ງນັ້ນ! ໃນບໍ່ຊ້າເຮົາຈະປະທານລາງວັນອັນຍິ່ງໃຫຍ່ໃຫ້ແກ່ເຂົາ). [ສູເຣາະຫ໌ ອັນນິສາ: 114].

ພຣະອົງຜູ້ສູງສົ່ງຈຶ່ງໄດ້ຊົງແຈ້ງໃຫ້ຊາບວ່າ ກິດຈະການທັງໝົດເຫຼົ່ານີ້ເປັນຄວາມດີສຳລັບຜູ້ທີ່ໄດ້ກະທຳມັນ, ແລະ ຄວາມດີຍ່ອມນຳມາເຊິ່ງຄວາມດີ ແລະ ປັດເປົ່າຄວາມຊົ່ວ, ແລະ ແທ້ຈິງຜູ້ສັດທາທີ່ຫວັງໃນຜົນຕອບແທນນັ້ນ ອັລລໍຫ໌ຈະຊົງປະທານຜົນຕອບແທນອັນຍິ່ງໃຫຍ່ໃຫ້ແກ່ລາວ, ແລະ ສ່ວນໜຶ່ງຂອງຜົນຕອບແທນອັນຍິ່ງໃຫຍ່ນັ້ນຄື: ການຫາຍໄປຂອງຄວາມວິຕົກກັງວົນ, ຄວາມໂສກເສົ້າ, ຄວາມທຸກໂສກ ແລະ ສິ່ງທີ່ຄ້າຍຄືກັນ.

## ບົດຮຽນ : ວ່າດ້ວຍການເອົາໃຈໃສ່ໃນການງານ ຫຼື ສາດຄວາມຮູ້ທີ່ມີປະໂຫຍດ

ໜຶ່ງໃນສາເຫດທີ່ຊ່ວຍປັດເປົ່າຄວາມກັງວົນອັນເກີດຈາກຄວາມຕຶງຄຽດທາງປະສາດ ແລະ ການທີ່ຈິດໃຈວຸ້ນວາຍຢູ່ກັບເລື່ອງທີ່ເຮັດໃຫ້ມຸ່ນໝອງຄື: ການເຮັດວຽກງານ ຫຼື ການສະແຫວງຫາຄວາມຮູ້ທີ່ມີປະໂຫຍດ; ເພາະສິ່ງເຫຼົ່ານັ້ນຈະຊ່ວຍບຽງເບນຈິດໃຈອອກຈາກການຄຳນຶງເຖິງສິ່ງທີ່ສ້າງຄວາມວິຕົກກັງວົນໃຫ້ແກ່ຕົນ. ແລະ ບາງທີດ້ວຍເຫດນັ້ນ ລາວຈຶ່ງລືມສາເຫດທີ່ພາໃຫ້ເກີດຄວາມກັງວົນ ແລະ ຄວາມໂສກເສົ້າ, ຈິດໃຈຂອງລາວຈຶ່ງມີຄວາມສຸກ ແລະ ຄວາມຫ້າວຫັນກໍເພີ່ມຂຶ້ນ, ເຊິ່ງສາເຫດນີ້ກໍເປັນສິ່ງທີ່ມີຮ່ວມກັນລະຫວ່າງຜູ້ສັດທາ ແລະ ຜູ້ອື່ນໆ ເຊັ່ນກັນ. ແຕ່ທະວ່າ ຜູ້ສັດທາຈະມີຄວາມໂດດເດັ່ນດ້ວຍການສັດທາ, ຄວາມບໍລິສຸດໃຈ ແລະ ການຫວັງຜົນຕອບແທນຈາກພຣະອົງອັລລໍຫ໌ໃນການສຶກສາຮ່ຳຮຽນຄວາມຮູ້ທີ່ລາວໄດ້ຮຽນ ຫຼື ສິດສອນ, ແລະ ໃນການປະຕິບັດຄວາມດີທີ່ລາວໄດ້ກະທຳ, ຫາກການກະທຳນັ້ນເປັນການປະຕິບັດສາສະນະກິດ ມັນກໍ່ຄືການປະຕິບັດສາສະນະກິດ, ແລະ ຫາກມັນເປັນວຽກງານທາງໂລກ ຫຼື ກິດຈະວັດປະຈຳວັນທີ່ຕັ້ງເຈດຕະນາອັນດີງາມໄວ້, ພ້ອມທັງມີເຈດຕະນາເພື່ອຂໍຄວາມຊ່ວຍເຫຼືອຜ່ານສິ່ງນັ້ນໃນ

ການເຊື່ອຟັງຕໍ່ອັລລໍຫ໌, ສິ່ງດັ່ງກ່າວນີ້ຈຶ່ງມີຜົນຢ່າງຫຼາຍ ແລະ ມີປະສິດທິພາບໃນການປັດເປົ່າຄວາມກັງວົນ, ຄວາມໂສກເສົ້າ ແລະ ຄວາມທຸກໃຈ. ມີຈັກຄົນແລ້ວທີ່ຖືກບີດທົດສອບດ້ວຍຄວາມວິຕົກກັງວົນ ແລະ ຄວາມໂສກເສົ້າທີ່ຄອບງຳຈົນເຮັດໃຫ້ລາວຕ້ອງປະສົບກັບພະຍາດຕ່າງໆ ບາງ, ດັ່ງນັ້ນ ຢາຮັກສາທີ່ມີປະສິດທິພາບຂອງລາວກໍ່ຄື (ການລືມສາເຫດທີ່ເຮັດໃຫ້ລາວທຸກໃຈ ແລະ ກັງວົນ, ແລະ ຫັນໄປສົນໃຈກັບວຽກງານທີ່ສຳຄັນຂອງລາວ).

ແລະ ສົມຄວນທີ່ວຽກງານທີ່ເຮັດນັ້ນຈະເປັນສິ່ງທີ່ຈິດໃຈຮູ້ສຶກເພີດເພີນ ແລະ ປາຖະໜາ, ເພາະສິ່ງນີ້ຈະຊ່ວຍໃຫ້ບັນລຸເປົ້າໝາຍທີ່ເປັນປະໂຫຍດນີ້ໄດ້ດີຍິ່ງຂຶ້ນ, ແລະ ອັລລໍຫ໌ຊົງຮູ້ດີຍິ່ງ.

ການຮວບຮວມແນວຄິດທັງໝົດໃຫ້ຈົດຈໍ່ຢູ່ກັບການເອົາໃຈໃສ່ ໃນການກະທຳຂອງມື້ປະຈຸບັນ, ສິ່ງໜຶ່ງທີ່ຊ່ວຍຂັບໄລ່ຄວາມກັງວົນ ແລະ ຄວາມທຸກໂສກຄື ການລວບລວມຄວາມຄິດທັງໝົດເພື່ອເອົາໃຈໃສ່ກັບການງານຂອງວັນນີ້, ແລະ ຕັດມັນອອກຈາກຄວາມກັງວົນໃນອະນາຄົດ ແລະ ຈາກຄວາມໂສກເສົ້າຕໍ່ອະດີດ. ດ້ວຍເຫດນີ້ ທ່ານນະບີຈຶ່ງໄດ້ຂໍຄວາມຄຸ້ມຄອງຈາກຄວາມກັງວົນ ແລະ ຄວາມໂສກເສົ້າ. ຄວາມໂສກເສົ້າຕໍ່ເລື່ອງລາວໃນອະດີດທີ່ບໍ່ສາມາດເອົາກັບຄືນມາ ຫຼື ແກ້ໄຂມັນໄດ້ ບໍ່ໄດ້ໃຫ້ປະໂຫຍດໃດໆ, ແລະ ຄວາມກັງວົນທີ່ເກີດຂຶ້ນຍ້ອນຄວາມຢ້ານກົວຕໍ່ອະນາຄົດກໍ່ອາ

ດລະເບັນອັນຕະລາຍ. ສະນັ້ນ ບ່າວຂອງພຣະອົງຈຶ່ງຄວນເບັນຄົນຂອງວັນນີ້, ໂດຍລວບລວມຄວາມຕັ້ງໃຈ ແລະ ຄວາມພະຍາຍາມຂອງຕົນໃນການປັບປຸງວັນເວລາ ນະປັດຈຸບັນ. ເພາະການລວບລວມຈິດໃຈໃສ່ສິ່ງນັ້ນ ຈະນຳໄປສູ່ການເຮັດການງານທີ່ສົມບູນ, ແລະ ມັນຈະຊ່ວຍປອບໃຈບ່າວຂອງພຣະອົງ ຈາກຄວາມກັງວົນ ແລະ ຄວາມໂສກເສົ້າ. ເມື່ອທ່ານນະບີ ຊໍລລັລລໍຮຸ ອະໄລຮີ ວະສັລລໍາ ໄດ້ຂໍພອນ (ດຸອາ) ຫຼື ໄດ້ແນະນຳປະຊາຊາດຂອງທ່ານສູ່ການຂໍພອນໃດໜຶ່ງ, ແທ້ຈິງແລ້ວ ທ່ານກຳລັງສົ່ງເສີມໃຫ້ມີຄວາມພາກພຽນ ແລະ ພະຍາຍາມເພື່ອໃຫ້ໄດ້ມາເຊິ່ງສິ່ງທີ່ຕົນໄດ້ຂໍໄວ້, ພ້ອມກັນກັບການຂໍຄວາມຊ່ວຍເຫຼືອຈາກອັລລໍຫ໌ ແລະ ການຫວັງໃນຄວາມໂປດປານເມດຕາຂອງພຣະອົງ. ແລະ ໃຫ້ຖິ້ມປະລະສິ່ງທີ່ຕົນເອງຂໍພອນໃຫ້ຫຼຸດພົ້ນຈາກມັນ; ເພາະການດຸອາ (ຂໍພອນ) ນັ້ນຕ້ອງຄຽງຄູ່ໄປກັບການກະທຳ, ສະນັ້ນ ບ່າວຜູ້ໜຶ່ງຈຶ່ງຕ້ອງພາກພຽນພະຍາຍາມໃນສິ່ງທີ່ຈະເບັນປະໂຫຍດແກ່ຕົນທັງໃນເລື່ອງສາສະໜາ ແລະ ໂລກນີ້, ພ້ອມທັງຂໍຕໍ່ພຣະຜູ້ເປັນເຈົ້າຂອງຕົນໃຫ້ເປົ້າໝາຍນັ້ນປະສົບຜົນສຳເລັດ ແລະ ຂໍຄວາມຊ່ວຍເຫຼືອຈາກພຣະອົງໃນການກະທຳນັ້ນ, ດັ່ງທີ່ທ່ານນະບີ ຊໍລລັລລໍຮົຮຸ ອະໄລຮີ ວະສັລລັມ ໄດ້ກ່າວວ່າ:

«احْرِصْ عَلَى مَا يَنْفَعُكَ وَاسْتَعِنْ بِاللَّهِ وَلَا تَعْجِزْ، وَإِذَا أَصَابَكَ شَيْءٌ فَلَا تَقُلْ: لَوْ أَنِّي فَعَلْتُ كَذَا كَانَ كَذَا وَكَذَا، وَلَكِنْ قُلْ: قَدَرُ اللَّهِ وَمَا شَاءَ فَعَلَ، فَإِنَّ لَوْ تَفْتَحُ

عَمَلَ الشَّيْطَانِ».

"ຈົ່ງລະວັງ (ດູແລຮັກສາໄວ້ເຊິ່ງ) ສິ່ງທີ່ເກີດປະໂຫຍດແກ່ເຈົ້າ ແລະ ເຈົ້າຈົ່ງຂໍຄວາມຊ່ວຍເຫຼືອຈາກອັລລໍຫ໌ ຈົ່ງຢ່າໝົດຫວັງ, ແລະ ຫາກສິ່ງໃດ ໄດ້ປະສົບແກ່ເຈົ້າ ຈົ່ງຢ່າກ່າວວ່າ: ແທ້ຈິງຫາກຂ້ອຍເຮັດມັນ ຈະເປັນເຊັ່ນນັ້ນ ເຊັ່ນນີ້, ແຕ່ຈົ່ງກ່າວວ່າ: "ກ໊ອດ ດະ ຣໍລໍ ວະມາ ຊາອະ ຟະອັລ," (ອັລລໍຫ໌ຊົງໄດ້ກຳໜົດ ແລະ ພຣະອົງຊົງກະທຳໃນສິ່ງທີ່ພຣະອົງຊົງປະສົງ), ເພາະວ່າຄຳວ່າ "ຫາກວ່າ" (لو) ຈະເປີດທາງໃຫ້ໄຊຕອນເຮັດວຽກ" ບັນທຶກໂດຍມຸສລິມ. ດັ່ງນັ້ນ ທ່ານນະບີ ﷺ ໄດ້ຮວບຮວມລະຫວ່າງການສັ່ງໃຊ້ ໃຫ້ມີຄວາມພາກພຽນໃນບັນດາເລື່ອງທີ່ເປັນປະໂຫຍດໃນທຸກ ສະຖານະການ, ການຂໍຄວາມຊ່ວຍເຫຼືອຈາກອັລລໍຫ໌ ແລະ ບໍ່ຍອມຈຳນົນຕໍ່ຄວາມອ່ອນແອ ເຊິ່ງເປັນຄວາມຂີ້ຄ້ານທີ່ເປັນອັນຕະລາຍ, ແລະ ການຍອມຈຳນົນຕໍ່ເລື່ອງລາວທີ່ຜ່ານພົ້ນໄປແລ້ວ ແລະ ການປະຈັກແຈ້ງໃນການກຳນົດ ແລະ ສະພາວະການຂອງອັລລໍຫ໌.

ແລະ ພຣະອົງໄດ້ກຳນົດເລື່ອງຕ່າງໆ ອອກເປັນສອງພາກສ່ວນ: ພາກສ່ວນໜຶ່ງທີ່ບ່າວສາມາດພະຍາຍາມເພື່ອໃຫ້ໄດ້ມາ ຫຼື ໄດ້ມາຕາມຄວາມສາມາດ, ຫຼື ປ້ອງກັນ ຫຼື ຜ່ອນເບົາໄດ້, ດັ່ງນັ້ນໃນເລື່ອງນີ້ບ່າວຈຶ່ງຈະຕ້ອງໃຊ້ຄວາມພະຍາຍາມຂອງຕົນ ແລະ ຂໍຄວາມຊ່ວຍເຫຼືອຈາກພຣະຜູ້ເປັນເຈົ້າຂອງຕົນ.

ສ່ວນໃນສິ່ງທີ່ບໍ່ສາມາດຫຼີກລ່ຽງໄດ້ນັ້ນ, ບ່າວຂອງພຣະອົງກໍຈະມີຈິດໃຈທີ່ສະຫງົບ, ເພິ່ງພໍໃຈ ແລະ ນ້ອມຮັບຕໍ່ສິ່ງນັ້ນ ແລະ ບໍ່ຕ້ອງສົງໄສເລີຍວ່າ ການຍຶດໝັ້ນໃນຫຼັກການນີ້ເປັນສາເຫດຂອງຄວາມສຸກ ແລະ ການປັດເປົ່າຄວາມວິຕົກກັງວົນ ແລະ ຄວາມໂສກເສົ້າ.

## ບົດຮຽນ : ການລໍາລຶກເຖິງອັລລໍຫ໌ໃຫ້ຫຼາຍໆ

ແລະ ສາເຫດທີ່ຍິ່ງໃຫຍ່ທີ່ສຸດຢ່າງໜຶ່ງທີ່ເຮັດໃຫ້ຈິດໃຈມີຄວາມຜາສຸກ ແລະ ສະຫງົບສຸກຄື: ການລໍາລຶກເຖິງອັລລໍຫ໌ໃຫ້ຫຼາຍໆ, ເພາະສິ່ງດັ່ງກ່າວນັ້ນມີຜົນທີ່ ໜ້າມະຫັດສະຈັນ ໃນການເຮັດໃຫ້ຈິດໃຈມີຄວາມເບີກບານ ແລະ ສະຫງົບສຸກ, ແລະ ລົບລ້າງຄວາມກັງວົນ ແລະ ຄວາມໂສກເສົ້າ. ພຣະອົງໄດ້ຕຣັດວ່າ:

﴿...أَلَا بِذِكۡرِ ٱللَّهِ تَطۡمَئِنُّ ٱلۡقُلُوبُ﴾

(...ຈົ່ງຮູ້ເຖີດ ດ້ວຍການລໍາລຶກເຖິງອັລລໍຫ໌ເທົ່ານັ້ນ ເຮັດໃຫ້ຈິດໃຈສະຫງົບສຸກ) [ສູເຣາະຫ໌ ອັຣ-ຣໍດຸ: 28]. ການລໍານຶກເຖິງອັລລໍຫ໌ນັ້ນມີຜົນອັນຍິ່ງໃຫຍ່ໃນການບັນລຸເຖິງເປົ້າໝາຍນີ້, ເນື່ອງດ້ວຍຄຸນລັກສະນະພິເສດຂອງມັນ ແລະ ຍ້ອນສິ່ງທີ່ຜູ້ເປັນບ່າວຫວັງຢາກໄດ້ຮັບຈາກລາງວັນຕອບແທນຂອງພຣະອົງ.

ການກ່າວເຖິງຄວາມໂປດປານຂອງອັລລໍຫ໌ ທັງທີ່ປະກົດຊັດເຈນ ແລະ ທີ່ຊ້ອນເລັ້ນ, ເຊັ່ນດຽວກັນ ການກ່າວເຖິງຄວາມໂປດປານຂອງອັລລໍຫ໌ ທັງທີ່ເປີດເຜີຍ ແລະ ທີ່ຊ້ອນເລັ້ນ, ແທ້ຈິງການຮັບຮູ້ ແລະ

ການກ່າວເຖິງມັນນັ້ນ ຈະຊ່ວຍປັດເປົ່າຄວາມກັງວົນ ແລະ ຄວາມໂສກເສົ້າອອກໄປ, ແລະ ຈະກະຕຸ້ນບ່າວຂອງພຣະອົງໃຫ້ສະແດງຄວາມຂອບໃຈ ເຊິ່ງເປັນຕຳແໜ່ງທີ່ສູງສົ່ງ ແລະ ປະເສີດທີ່ສຸດ ເຖິງແມ່ນວ່າບ່າວຜູ້ນັ້ນຈະຢູ່ໃນສະພາບທີ່ຍາກຈົນ ຫຼື ເຈັບປ່ວຍ ຫຼື ປະສົບບົດທົດສອບປະການອື່ນ ໆ ກໍຕາມ. ເພາະເມື່ອລາວໄດ້ປຽບທຽບລະຫວ່າງຄວາມໂປດປານຂອງອັລລໍຫ໌ທີ່ມີຕໍ່ລາວ - ເຊິ່ງມັນມີຢູ່ຢ່າງຫຼວງຫຼາຍຈົນບໍ່ສາມາດນັບ ຫຼື ຄຳນວນໄດ້ - ກັບຄວາມທຸກຍາກທີ່ປະສົບກັບລາວ, ຄວາມທຸກຍາກນັ້ນກໍບໍ່ສາມາດທຽບໄດ້ເລີຍກັບຄວາມໂປດປານທັງຫຼາຍ.

ແຕ່ທະວ່າ ສິ່ງທີ່ບໍ່ພຶງພໍໃຈ ແລະ ອຸປະສັກຕ່າງໆ ເມື່ອອັລລໍຫ໌ໄດ້ທົດສອບບ່າວຂອງພຣະອົງດ້ວຍສິ່ງເຫຼົ່ານັ້ນ, ແລະ ລາວໄດ້ປະຕິບັດຫນ້າທີ່ແຫ່ງການອົດທົນ, ຄວາມພໍໃຈ ແລະ ການຍອມຈຳນົນ, ຜົນກະທົບຂອງມັນກໍຈະເບົາບາງລົງ ແລະ ພາລະຂອງມັນກໍຈະຫຼຸດລົງ, ແລະ ຄວາມຫວັງຂອງບ່າວຕໍ່ຜົນຕອບແທນຂອງມັນ ພ້ອມກັບການເປັນບ່າວຕໍ່ອັລລໍຫ໌ດ້ວຍການປະຕິບັດຫນ້າທີ່ແຫ່ງການອົດທົນ ແລະ ຄວາມພໍໃຈນັ້ນ, ຈະປ່ຽນສິ່ງທີ່ຂົມຂື່ນໃຫ້ກາຍເປັນສິ່ງທີ່ຫວານຊື່ນ, ຈົນເຮັດໃຫ້ຄວາມຫວານຊື່ນຂອງຜົນຕອບແທນນັ້ນ ເຮັດໃຫ້ລາວລືມຄວາມຂົມຂື່ນຂອງການອົດທົນ.

ການເບິ່ງຜູ້ທີ່ຢູ່ຕ່ຳ ທຸກຍາກ ກວ່າພວກເຮົາ, ແລະ ສ່ວນໜຶ່ງຈາກສິ່ງທີ່ມີປະໂຫຍດທີ່ສຸດໃນເລື່ອງນີ້ ຄືການປະຕິບັດຕາມສິ່ງທີ່ທ່ານນະບີ ຊໍລລັລລໍຮຸ ອະໄລຮິ

ອະສັລລໍາ ໄດ້ຊີ້ແນະໄວ້ໃນຣະດີຊສໍຣີຫ໌ ເຊິ່ງທ່ານໄດ້ກ່າວວ່າ:

«انْظُرُوا إِلَى مَنْ هُوَ أَسْفَلُ مِنْكُمْ وَلَا تَنْظُرُوا إِلَى مَنْ هُوَ فَوْقَكُمْ فَإِنَّهُ أَجْدَرُ أَنْ لَا تَزْدَرُوا نِعْمَةَ اللَّهِ عَلَيْكُمْ».

(ພວກເຈົ້າຈົ່ງເບິ່ງຜູ້ທີ່ດ້ອຍກວ່າພວກເຈົ້າ ແລະ ຢ່າເບິ່ງຜູ້ທີ່ເໜືອກວ່າພວກເຈົ້າ, ເພາະມັນເປັນການສົມຄວນກວ່າທີ່ພວກເຈົ້າຈະບໍ່ດູຖູກຄວາມໂປດປານຂອງອັລລໍຫ໌ທີ່ມີຕໍ່ພວກເຈົ້າ) ບັນທຶກໂດຍມຸສລິມ.

ແທ້ຈິງແລ້ວ ເມື່ອບ່າວຄົນໜຶ່ງໄດ້ຄໍານຶງເຖິງຫັດສະນະອັນສູງສົ່ງນີ້ຢູ່ສະເໝີ, ລາວຈະເຫັນວ່າຕົນເອງນັ້ນເໜືອກວ່າຜູ້ຄົນຈໍານວນຫຼາຍໃນເລື່ອງຂອງສະຫວັດດີພາບ ແລະ ປັດໄຈຕ່າງໆ ພ້ອມທັງສິ່ງທີ່ກ່ຽວຂ້ອງກັບມັນ, ບໍ່ວ່າສະພາບຂອງລາວຈະເປັນແນວໃດກໍຕາມ. ດັ່ງນັ້ນ ຄວາມວິຕົກກັງວົນ ແລະ ຄວາມໂສກເສົ້າຂອງລາວກໍ່ຈະຈາງຫາຍໄປ, ແລະ ຄວາມສຸກ ຄວາມປິຕິຍິນດີຂອງລາວກໍ່ຈະເພີ່ມພູນຂຶ້ນ ດ້ວຍບັນດາຄວາມໂປດປານຂອງອັລລໍຫ໌ ທີ່ພຣະອົງໄດ້ຊົງປະທານໃຫ້ລາວເໜືອກວ່າຄົນອື່ນໆ ທີ່ດ້ອຍກວ່າລາວໃນເລື່ອງເຫຼົ່ານັ້ນ.

ແລະ ຍິ່ງບ່າວຄົນໜຶ່ງໄຕ່ຕອງເຖິງຄວາມໂປດປານຂອງອັລລໍຫ໌ຫຼາຍເທົ່າໃດ, ທັງທີ່ເປີດເຜີຍ ແລະ ທີ່ຊ້ອນເລັ້ນ, ທັງທາງດ້ານສາສະໜາ ແລະ ທາງດ້ານໂລກນີ້, ລາວກໍ່ຈະຍິ່ງເຫັນວ່າ

ພຣະຜູ້ເປັນເຈົ້າຂອງລາວໄດ້ປະທານຄວາມດີງາມໃຫ້ແກ່ລາວ ແລະ ໄດ້ປັດເປົ່າຄວາມຊົ່ວຮ້າຍຕ່າງໆ ນາໆ ອອກໄປຈາກລາວ. ແລະ ບໍ່ຕ້ອງສົງໄສເລີຍວ່າ ສິ່ງນີ້ຈະຊ່ວຍຂັບໄລ່ຄວາມກັງວົນ ແລະ ຄວາມໂສກເສົ້າ, ແລະ ຈະນຳມາເຊິ່ງຄວາມສຸກ ແລະ ຄວາມປິຕິຍິນດີ.

## ບົດຮຽນ : ການສະແຫວງຫາວິທີຂະຈັດ ສາເຫດທີ່ເຮັດໃຫ້ເກີດຄວາມທຸກໂສກ, ແລະ ສ້າງສາເຫດທີ່ນຳມາເຊິ່ງຄວາມສຸກ.

ສາເຫດໜຶ່ງທີ່ນຳມາເຊິ່ງຄວາມສຸກ ແລະ ຂະຈັດຄວາມກັງວົນ ແລະ ຄວາມໂສກເສົ້າ ຄືການພະຍາຍາມກຳຈັດສາເຫດທີ່ພາໃຫ້ເກີດຄວາມກັງວົນ ແລະ ສະແຫວ່ງຫາສາເຫດທີ່ນຳມາເຊິ່ງຄວາມສຸກ; ນັ້ນຄືການລືມສິ່ງທີ່ບໍ່ພໍໃຈໃນອະດີດທີ່ບໍ່ສາມາດແກ້ໄຂກັບຄືນໄດ້, ແລະ ໃຫ້ຮູ້ວ່າການໝົກໝຸ້ນຄິດເຖິງມັນເປັນສິ່ງທີ່ໄຮ້ສາລະ ແລະ ເປັນໄປບໍ່ໄດ້, ທັງຫຍັງເປັນຄວາມໂງ່ຈ້າ ແລະ ບ້າຄັ່ງ. ສະນັ້ນ ລາວຕ້ອງຕໍ່ສູ້ກັບຈິດໃຈຂອງຕົນບໍ່ໃຫ້ຄິດເຖິງມັນ.

ເຊັ່ນດຽວກັນ ລາວຕ້ອງຕໍ່ສູ້ກັບຈິດໃຈຂອງຕົນບໍ່ໃຫ້ກັງວົນຕໍ່ສິ່ງທີ່ຈະເກີດຂຶ້ນໃນອະນາຄົດ, ຈາກສິ່ງທີ່ລາວຈິນຕະນາການໄປເອງ ເຊັ່ນ ຄວາມທຸກຍາກ, ຄວາມຢ້ານກົວ ຫຼື ສິ່ງທີ່ບໍ່ພໍໃຈອື່ນໆ ທີ່ລາວຄິດພາບໄປເອງໃນອະນາຄົດຂອງຊີວິດ.

ລາວຈຶ່ງຮັບຮູ້ວ່າເລື່ອງລາວໃນອະນາຄົດນັ້ນເປັນສິ່ງທີ່ຖືກປົກປິດໄວ້ ບໍ່ວ່າຈະເປັນຄວາມດີ ຫຼື ຄວາມຊົ່ວ, ຄວາມຫວັງ ຫຼື ຄວາມເຈັບປວດທີ່ຈະເກີດຂຶ້ນ,

ແລະມັນຢູ່ໃນພຣະຫັດຂອງພຣະຜູ້ຊົງອຳນາດ ພຣະຜູ້ຊົງປຣີຊາຍານ. ບັນດາບ່າວບໍ່ມີອຳນາດໃດໆ ໃນເລື່ອງດັ່ງກ່າວ ນອກຈາກການພາກພຽນພະຍາຍາມໃນການສະແຫວງຫາສິ່ງທີ່ເປັນປະໂຫຍດ ແລະ ປ້ອງກັນສິ່ງທີ່ເປັນໄພອັນຕະລາຍ. ແລະບ່າວຜູ້ໜຶ່ງກໍຮູ້ວ່າ ຖ້າຫາກລາວຫັນເຫຄວາມຄິດຂອງຕົນອອກຈາກຄວາມວິຕົກກັງວົນກ່ຽວກັບອະນາຄົດຂອງລາວ, ແລະ ໄດ້ມອບໝາຍຕໍ່ພຣະຜູ້ເປັນເຈົ້າຂອງລາວໃນການປັບປຸງແກ້ໄຂມັນ, ແລະ ມີຄວາມສະຫງົບໝັ້ນຄົງຕໍ່ພຣະອົງໃນເລື່ອງນັ້ນ, ເມື່ອລາວໄດ້ປະຕິບັດເຊັ່ນນັ້ນແລ້ວ ຫົວໃຈຂອງລາວກໍຈະສະຫງົບ, ສະພາບການຂອງລາວກໍຈະດີຂຶ້ນ, ແລະ ຄວາມທຸກກັງວົນຂອງລາວກໍຈະສູນສິ້ນໄປ.

ການຂໍດຸອາ, ແລະ ໃນບັນດາສິ່ງທີ່ມີປະໂຫຍດທີ່ສຸດໃນການຄຳນຶງເຖິງເລື່ອງຕ່າງໆ ໃນອະນາຄົດ ຄືການໃຊ້ດຸອາບົດນີ້ ດັ່ງທີ່ທ່ານນະບີ ﷺ ເຄີຍໃຊ້ໃນການຂໍພອນ:

«اللَّهُمَّ أَصْلِحْ لِي دِينِي الَّذِي هُوَ عِصْمَةُ أَمْرِي وَأَصْلِحْ لِي دُنْيَايَ الَّتِي فِيهَا مَعَاشِي، وَأَصْلِحْ لِي آخِرَتِي الَّتِي إِلَيْهَا مَعَادِي، وَاجْعَلِ الْحَيَاةَ زِيَادَةً لِي فِي كُلِّ خَيْرٍ وَالْمَوْتَ رَاحَةً لِي مِنْ كُلِّ شَرٍّ».

«ໂອ້ອັລລໍຮ໌ ຂໍພຣະອົງຊົງເຮັດໃຫ້ສາສະໜາຂອງຂ້ອຍດີງາມດ້ວຍເຖິດ ເຊິ່ງເປັນສິ່ງຄຸ້ມຄອງກິດຈະການທັງປວງຂອງຂ້ອຍ, ແລະ

ຂໍລີງເຮັດໃຫ້ໂລກນີ້ຂອງຂ້ອຍດີງາມດ້ວຍເຖີດ ເຊິ່ງເປັນບ່ອນດໍາລົງຊີບຂອງຂ້ອຍ, ແລະ ຂໍລີງເຮັດໃຫ້ໂລກອາຄີເຣາະຫ໌ຂອງຂ້ອຍດີງາມດ້ວຍເຖີດ ເຊິ່ງເປັນບ່ອນທີ່ຂ້ອຍຈະກັບຄືນໄປ, ແລະ ຂໍລີງເຮັດໃຫ້ການມີຊີວິດຢູ່ເປັນການເພີ່ມພູນໃນທຸກໆຄວາມດີໃຫ້ແກ່ຂ້ອຍດ້ວຍເຖີດ, ແລະ ຂໍລີງເຮັດໃຫ້ຄວາມຕາຍເປັນການພັກຜ່ອນໃຫ້ແກ່ຂ້ອຍຈາກຄວາມຊົ່ວຮ້າຍທັ້ງຫຼາຍດ້ວຍເຖີດ» ບັນທຶກໂດຍມຸສລິມ. ແລະເຊັ່ນດຽວກັນ ທ່ານນະບີຫຍັງດູອາອີກວ່າ:

«اللَّهُمَّ رَحْمَتَكَ أَرْجُو فَلَا تَكِلْنِي إِلَى نَفْسِي طَرْفَةَ عَيْنٍ وَأَصْلِحْ لِي شَأْنِي كُلَّهُ، لَا إِلَهَ إِلَّا أَنتَ».

(ໂອ້ອັລລໍຫ໌ ຄວາມເມດຕາຂອງພຣະອົງຄືສິ່ງທີ່ຂ້າພະເຈົ້າປາຖະໜາ, ດັ່ງນັ້ນ ຂໍພຣະອົງຢ່າໄດ້ມອບໝາຍຂ້ອຍໃຫ້ກັບຕົວຂອງຂ້າພະເຈົ້າເອງ ແມ້ພຽງຊົ່ວພິບຕາດຽວ, ແລະ ຂໍພຣະອົງໄດ້ໂປດປັບປຸງກິດຈະການງານທັງໝົດຂອງຂ້າພະເຈົ້າໃຫ້ດີຂຶ້ນ, ບໍ່ມີພຣະເຈົ້າອື່ນໃດນອກຈາກພຣະອົງ). ບັນທຶກໂດຍ ອາບູ ດາວູດ ດ້ວຍສາຍລາຍງານທີ່ໜ້າເຊື່ອຖື ແລະ ຖືກຕ້ອງ. ເມື່ອບ່າວຄົນໜຶ່ງໄດ້ວິງວອນຂໍດູອານີ້ຢູ່ສະເໝີ, ເຊິ່ງເປັນສິ່ງທີ່ຈະນໍາຄວາມດີງາມມາສູ່ອະນາຄົດຂອງລາວທັງໃນດ້ານສາສະໜາ ແລະ ໂລກດຸນຍາ, ດ້ວຍຫົວໃຈທີ່ຕັ້ງໝັ້ນ ແລະ ເຈດຕະນາທີ່ບໍລິສຸດ,

ພ້ອມທັງພາກພຽນພະຍາຍາມໃນສິ່ງທີ່ຈະເຮັດໃຫ້ຄຳຂໍນັ້ນເປັນຈິງ, ອັລລໍຫ໌ກໍຈະຊົງຕອບຮັບໃນສິ່ງທີ່ລາວໄດ້ຂໍ, ໄດ້ຫວັງ ແລະ ໄດ້ລົງມືເຮັດ, ແລະ ຄວາມທຸກກັງວົນຂອງລາວກໍຈະປ່ຽນເປັນຄວາມສຸກ ແລະ ຄວາມເບີກບານມ່ວນຊື່ນ.

## ບົດຮຽນ :

## ວ່າດ້ວຍການປະເມີນສະຖານະການທີ່ຊົ່ວຮ້າຍ

ໜຶ່ງໃນວິທີການທີ່ມີປະໂຫຍດທີ່ສຸດ ເພື່ອຂະຈັດຄວາມວິຕົກກັງວົນ ແລະ ຄວາມໂສກເສົ້າ ເມື່ອບ່າວຄົນໜຶ່ງປະສົບກັບໄພພິບັດບາງຢ່າງ, ຄືການພະຍາຍາມບັນເທົາທຸກນັ້ນ ໂດຍການຄາດຄະເນເຖິງສະຖານະການທີ່ເລວຮ້າຍທີ່ສຸດທີ່ອາດຈະເກີດຂຶ້ນ, ແລະ ກຽມຈິດໃຈຂອງຕົນເພື່ອຮັບມືກັບມັນ. ເມື່ອລາວໄດ້ເຮັດເຊັ່ນນັ້ນແລ້ວ, ລາວກໍຈົ່ງພະຍາຍາມບັນເທົາສິ່ງທີ່ສາມາດເຮັດໄດ້ຕາມຄວາມສາມາດຂອງຕົນ. ດ້ວຍການກຽມພ້ອມ ແລະ ຄວາມພະຍາຍາມອັນເປັນປະໂຫຍດນີ້, ຄວາມໂສກເສົ້າ ແລະ ຄວາມກັງວົນຂອງລາວກໍຈະໝົດໄປ, ແລະ ຄວາມພະຍາຍາມດັ່ງກ່າວນີ້ ຈະເປັນການນຳມາເຊິ່ງຜົນປະໂຫຍດ ແລະ ປ້ອງກັນຄວາມເສຍຫາຍທີ່ບ່າວຜູ້ນັ້ນສາມາດເຮັດໄດ້.

ດັ່ງນັ້ນ ເມື່ອມີເຫດຂອງຄວາມຢ້ານກົວ, ສາເຫດຂອງຄວາມເຈັບປ່ວຍ, ສາເຫດຂອງຄວາມທຸກຍາກ ແລະ ການສູນເສຍສິ່ງທີ່ລາວຮັກ ແລະ ປາດຖະໜາ, ລາວກໍຄວນຮັບມືກັບມັນດ້ວຍຄວາມສະຫງົບ ແລະ

ກຽມຈິດໃຈພ້ອມຮັບມືກັບມັນໄວ້ລ່ວງໜ້າໃຫ້ຫຼາຍທີ່ສຸດ ເພາະການກຽມພ້ອມຮັບມືກັບສະຖານະການທີ່ຊົ່ວຮ້າຍທີ່ອາດຈະເກີດຂຶ້ນໂດຍທີ່ເຮົາບໍ່ຢາກໃຫ້ມັນເກີດຂຶ້ນ, ຈະເຮັດໃຫ້ສິ່ງເຫຼົ່ານັ້ນເບົາບາງລົງ ແລະ ບໍ່ຮຸນແຮງຈົນເກີນໄປ, ໂດຍສະເພາະຢ່າງຍິ່ງ ຖ້າຫາກລາວເຮັດໃຫ້ຕົນເອງຫຍຸ້ງຢູ່ກັບການປ້ອງກັນ ແລະ ແກ້ໄຂບັນຫານັ້ນຕາມຄວາມສາມາດຂອງລາວ, ກໍ່ຈະເປັນການລວມລະຫວ່າງການກຽມຈິດໃຈຍອມຮັບອຸປະສັກຕ່າງ ກັບ ການລົງມືແກ້ໄຂຢ່າງມີປະໂຫຍດ ເຊິ່ງຈະຊ່ວຍໃຫ້ລາວບໍ່ຕ້ອງກັງວົນກັບອຸປະສັກຕ່າງໆ, ແລະ ລາວຫຍັງຕໍ່ສູ້ກັບຈິດໃຈຂອງຕົນເອງເພື່ອສ້າງກຳລັງໃຈໃຫມ່ໃນການຜະເຊີນຄວາມຍາກລຳບາກ, ພ້ອມກັບເພິ່ງພາຕໍ່ອັລລໍຫ໌ ແລະ ມີຄວາມໄວ້ວາງໃຈທີ່ດີຕໍ່ພຣະອົງ ແນ່ນອນວ່າ ສິ່ງຕ່າງໆ ເຫຼົ່ານີ້ລ້ວນມີປະໂຫຍດອັນໃຫຍ່ຫຼວງໃນການສ້າງຄວາມສຸກ ແລະ ຄວາມເບີກບານໃຈ, ແລະ ຫຍັງເປັນຫົນທາງສູ່ລາງວັນຜົນຕອບແທນທັງໃນໂລກນີ້ ແລະ ໂລກໜ້າ, ແລະ ສິ່ງນີ້ເປັນເລື່ອງທີ່ໄດ້ຖືກພິສູດ ແລະ ປະສົບມາທົດລອງປະຕິບັດມາແລ້ວຢູ່ຢ່າງຫຼວງຫຼາຍແທ້ໆ.

## ບົດຮຽນ : ຄວາມເຂັ້ມແຂງຂອງຈິດໃຈ, ການບໍ່ຫວັ່ນໄຫວ ແລະ ບໍ່ຄ້ອຍຕາມອາລົມໃຝ່ຕ່ຳ.

ອີກສິ່ງໜຶ່ງທີ່ເປັນການຮັກສາທີ່ດີທີ່ສຸດສຳລັບພະຍາດທາງຈິດໃຈ ແລະ ຕະຫລອດຈົນພະຍາດທາງຮ່າງກາຍ ຄື ຄວາມເຂັ້ມແຂງຂອງຈິດໃຈ ແລະ ການບໍ່ຫວັ່ນໄຫວຕໍ່ພາບລວງຕາ ແລະ ຈິນຕະນາການຕ່າງໆ

ທີ່ມາຈາກຄວາມຄິດທີ່ຊົ່ວຮ້າຍບໍ່ດີ. ຄວາມໂກດແຄ້ນ ແລະ ຄວາມສັບສົນວຸ້ນວາຍໃຈ,
ພ້ອມທັງການຄາດຄະເນເຖິງການເກີດຂຶ້ນຂອງສິ່ງທີ່ບໍ່ປາດຖະໜາ ແລະ ການສູນເສຍສິ່ງທີ່ເປັນທີ່ຮັກ, ສິ່ງເຫຼົ່ານີ້ລ້ວນເປັນສາເຫດທີ່ນຳໄປສູ່ຄວາມວິຕົກກັງວົນ, ຄວາມໂສກເສົ້າ, ເປັນພະຍາດທາງຈິດໃຈ ແລະ ຮ່າງກາຍ, ແລະ ພາວະຈິດຕົກຕ່ຳຢ່າງຮຸນແຮງ ເຊິ່ງມີຜົນກະທົບທີ່ຊົ່ວຮ້າຍ ແລະ
ຜູ້ຄົນຕ່າງກໍໄດ້ເຫັນເຖິງຜົນເສຍຫາຍອັນຫຼວງຫຼາຍຂອງມັນ.

ການມອບໝາຍຕໍ່ອັລລໍຫ໌, ເມື່ອໃດກໍ່ຕາມທີ່ຈິດໃຈໄດ້ເພິ່ງພາຕໍ່ອັລລໍຫ໌ ແລະ ມອບໝາຍຕໍ່ພຣະອົງ, ບໍ່ຍອມຈຳນົນຕໍ່ພາບລວງຕາ ແລະ ບໍ່ປ່ອຍໃຫ້ຈິນຕະນາການທີ່ບໍ່ດີເຂົ້າມາຄອບງຳ, ແລະ ເຊື່ອໝັ້ນໃນອັລລໍຫ໌ ແລະ ປາດຖະໜາໃນຄວາມໂປດປານຂອງພຣະອົງ, ຄວາມກັງວົນ ແລະ ຄວາມໂສກເສົ້າກໍ່ຈະຖືກປັດເປົ່າອອກໄປຈາກເຂົາ, ແລະ ພະຍາດຕ່າງໆ ທາງດ້ານຮ່າງກາຍ ແລະ ຈິດໃຈສ່ວນຫຼາຍກໍ່ຈະສູນສິ້ນໄປ, ແລະ ຈິດໃຈກໍ່ຈະໄດ້ຮັບຄວາມເຂັ້ມແຂງ, ຄວາມເບີກບານ ແລະ ຄວາມສຸກຢ່າງທີ່ບໍ່ສາມາດບັນລະຍາຍໄດ້.
ມີຫຼາຍສຳໃດແລ້ວທີ່ໂຮງໝໍເຕັມໄປດ້ວຍຄົນປ່ວຍຈາກພາບລວງຕາ ແລະ ຈິນຕະນາການທີ່ໄຮ້ສາລະ, ແລະ ມີຫຼາຍສຳໃດແລ້ວທີ່ເລື່ອງເຫຼົ່ານີ້ໄດ້ສົ່ງຜົນກະທົບຕໍ່ຈິດໃຈຂອງຜູ້ທີ່ເຂັ້ມແຂງທັງຫຼາຍ, ບໍ່ຕ້ອງເວົ້າເຖິງຜູ້ທີ່ອ່ອນແອ, ແລະ ມີຫຼາຍສຳໃດແລ້ວທີ່ມັນໄດ້ນຳໄປສູ່ຄວາມໂງ່ເຂົາ ແລະ

ຄວາມວິປະລິດ. ແລະ ຜູ້ທີ່ປອດໄພຄືຜູ້ທີ່ອັລລໍຫ໌ຊົງປົກປ້ອງ ແລະ
ຊົງໃຫ້ຄວາມສໍາເລັດແກ່ເຂົາໃນການຕໍ່ສູ້ກັບຈິດໃຈຂອງຕົນເອງ ເພື່ອໃຫ້ໄດ້ມາເຊິ່ງສາເຫດຕ່າງໆ ທີ່ເປັນປະໂຫຍດ, ທີ່ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຈິດໃຈ, ແລະ ປັດເປົ່າຄວາມກັງວົນຂອງມັນອອກໄປ, ດັ່ງທີ່ພຣະອົງຜູ້ສູງສົ່ງໄດ້ກ່າວວ່າ:

﴿...وَمَن يَتَوَكَّلۡ عَلَى ٱللَّهِ فَهُوَ حَسۡبُهُۥٓۚ...﴾

(...ແລະຜູ້ໃດມອບໝາຍຕໍ່ອັລລໍຫ໌ ພຣະອົງກໍ່ຈະຊົງພໍພຽງສໍາຫຼັບເຂົາ...) [ສູເຣາະຫ໌ ອັດຕໍລາກ :3] ກໍ່ຄື ພຽງພໍສໍາຫຼັບລາວໃນທຸກ ໆ ເລື່ອງ ທີ່ສໍາຄັນຂອງລາວ ທັງໃນເລື່ອງສາສະໜາ ແລະ ເລື່ອງທາງໂລກຂອງລາວ.

ດັ່ງນັ້ນ ຜູ້ທີ່ມອບໝາຍແດ່ອັລລໍຫ໌ ຍ່ອມເປັນຜູ້ທີ່ມີຫົວໃຈເຂັ້ມແຂງ ບໍ່ຖືກຄວາມຫວາດກົວໃນຈິດໃຈເຮັດໃຫ້ຫວັ່ນໄຫວ ແລະ ບໍ່ສະທົກສະທ້ານຕໍ່ເຫດການຕ່າງ ໆ, ແລະ ເຫດການຕ່າງ ໆ ກໍ່ບໍ່ສາມາດເຮັດໃຫ້ເຂົາຫວັ່ນໄຫວໄດ້ ເພາະເຂົາຮູ້ວ່າສິ່ງນັ້ນເກີດຈາກຄວາມອ່ອນແອຂອງຈິດໃຈ, ແລະ ຈາກຄວາມຂີ້ຂາດ ແລະ ຄວາມຢ້ານກົວທີ່ບໍ່ມີຢູ່ຈິງ, ແລະ ພ້ອມກັນນັ້ນ ເຂົາກໍ່ຮູ້ວ່າ ແທ້ຈິງອັລລໍຫ໌ໄດ້ຊົງຄໍ້າປະກັນແກ່ຜູ້ທີ່ມອບໝາຍຕໍ່ພຣະອົງ ດ້ວຍຄວາມພຽງພໍຢ່າງສົມບູນ, ເຂົາຈຶ່ງໄວ້ວາງໃຈໃນອັລລໍຫ໌ ແລະ ຈິດໃຈຂອງເຂົາກໍ່ສະຫງົບດ້ວຍຄໍາສັນຍາຂອງພຣະອົງ, ຄວາມວິຕົກກັງວົນຂອງເຂົາຈຶ່ງຫາຍໄປ, ແລະ ຄວາມຍາກລໍາບາກຂອງເຂົາກໍ່ຈະປ່ຽນເປັນຄວາມງ່າຍດາຍ,

ຄວາມໂສກເສົ້າຂອງເຂົາກໍ່ຈະປ່ຽນເປັນຄວາມສຸກ (ແລະ "الترح ຕາຣະຫ໌": ຄວາມໂສກເສົ້າ), ແລະ ຄວາມຢ້ານກົວຂອງເຂົາກໍ່ຈະປ່ຽນເປັນຄວາມປອດໄພ, ດັ່ງນັ້ນ ພວກເຮົາຈຶ່ງຂໍຕໍ່ພຣະອົງຜູ້ສູງສົ່ງ ເພື່ອຄວາມປອດໄພ ແລະ ຄວາມຜາສຸກ ແລະ ຂໍໃຫ້ພຣະອົງຊົງໂປດປານແກ່ພວກເຮົາ ດ້ວຍຄວາມເຂັ້ມແຂງ ແລະ ຄວາມໜັກແໜ້ນຂອງຫົວໃຈ, ແລະ ດ້ວຍການມອບໝາຍທີ່ສົມບູນ ເຊິ່ງອັລລໍຫ໌ໄດ້ຊົງຄ້ຳປະກັນແກ່ຜູ້ທີ່ປະຕິບັດມັນ ດ້ວຍທຸກຄວາມດີງາມ, ແລະ ປ້ອງກັນທຸກສິ່ງທີ່ບໍ່ພຶງປະສົງ ແລະ ຄວາມເສຍຫາຍ (ແລະ الضير ອັດ-ດອຍຣ໌: ຄວາມເສຍຫາຍ).

## ບົດຮຽນ :
## ວ່າດ້ວຍການກຽມຈິດໃຈເພື່ອການອົດທົນຕໍ່ຂໍ້ບົກພ່ອງຂອງຜູ້ອື່ນ

ໃນຄຳເວົ້າຂອງທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ໄດ້ກ່າວວ່າ:

«لَا يَفْرَكْ مُؤْمِنٌ مُؤْمِنَةً إِنْ كَرِهَ مِنْهَا خُلُقًا رَضِيَ مِنْهَا خُلُقًا آخَرَ».

(ສາມີຜົວທີ່ມີສັດທາ ຈົ່ງຢ່າກຽດຊັງພັນລະຍາເມຍທີ່ມີສັດທາ ຫາກລາວບໍ່ມັກນິໄສທີ່ບໍ່ດີບາງປະການໃນຕົວນາງ ລາວກໍ່ນ່າຈະພໍໃຈນິໄສທີ່ດີອື່ນ ໆ ໃນຕົວນາງ) ບັນທຶກໂດຍມຸສລິມ.

ປະໂຫຍດອັນຍິ່ງໃຫຍ່ສອງປະການທີ່ໄດ້ຮັບ:

ປະໂຫຍດຂໍ້ທີໜຶ່ງ: ຄືການຊີ້ແນະກ່ຽວກັບການປະຕິບັດຕົນຕໍ່ພັນລະຍາ, ຍາດຕິພີ່ນ້ອງ, ເພື່ອນສະໜິດມິດສະຫາຍ, ຜູ້ທີ່ຄົບຫາສະມາຄົມ ເພື່ອນຮ່ວມງານນຳ ແລະ ທຸກ ໆ ຄົນທີ່ທ່ານມີຄວາມສຳພັນ ແລະ ຄວາມຜູກພັນນຳ. ໂດຍທີ່ທ່ານຄວນກຽມຈິດກຽມໃຈຂອງຕົນເອງໄວ້ວ່າ ມັນເປັນເລື່ອງທຳມະດາທີ່ຈະຕ້ອງມີຂໍ້ບົກພ່ອງ ຫຼື ຂໍ້ຕຳໜິ ຫຼື ບາງສິ່ງບາງຢ່າງທີ່ທ່ານບໍ່ມັກບໍ່ພໍໃຈໃນຕົວຂອງພວກເຂົາ. ດັ່ງນັ້ນ ເມື່ອທ່ານພົບເຫັນສິ່ງດັ່ງກ່າວ, ກໍ່ຈົ່ງນຳເອົາສິ່ງນັ້ນມາປຽບທຽບກັບສິ່ງທີ່ຈຳເປັນ ຫຼື ສົມຄວນທີ່ທ່ານຈະຕ້ອງປະຕິບັດ ໃນການຮັກສາຄວາມສຳພັນອັນແໜ້ນແຟ້ນ ແລະ ການດຳລົງຮັກສາໄວ້ເຊິ່ງຄວາມຮັກແພງ, ດ້ວຍການຫວນຄິດເຖິງຄວາມດີງາມຕ່າງ ໆ ທີ່ມີໃນຕົວຂອງພວກເຂົາ, ຕະຫຼອດຈົນຄຳນຶງເຖິງເປົ້າໝາຍທັງສ່ວນຕົວ ແລະ ສ່ວນລວມ. ແລະ ດ້ວຍການເມີນເສີຍ ຕໍ່ຂໍ້ບົກພ່ອງ ແລະ ຫັນມາໃສ່ໃຈຕໍ່ຄວາມດີງາມນີ້ເອງ, ມິດຕະພາບ ແລະ ຄວາມສຳພັນກໍ່ຈະຍືນຍົງຄົງຢູ່ຕະຫຼອດໄປ, ຄວາມສະບາຍໃຈກໍ່ຈະເກີດຂຶ້ນຢ່າງສົມບູນ ແລະ ທ່ານກໍ່ຈະໄດ້ຮັບມັນ.

ປະໂຫຍດຂໍ້ທີສອງ: ຄືການຈັດການກັບຄວາມທຸກ ແລະ ຄວາມກັງວົນໃຈ, ເຮັດໃຫ້ມີຄວາມສະຫງົບສຸກ, ດຳລົງຮັກສາໃນການປະຕິບັດສິດທິທີ່ຈຳເປັນ ແລະ ສິດທິທີ່ສົ່ງເສີມໃຫ້ກະທຳ, ແລະ

ເຮັດໃຫ້ເກີດຄວາມສະຫງົບສຸກຂຶ້ນລະຫວ່າງທັງສອງຝ່າຍ. ສ່ວນຜູ້ໃດກໍຕາມທີ່ບໍ່ໄດ້ຮັບການຊີ້ນຳຈາກສິ່ງທີ່ທ່ານນະບີ ﷺ ໄດ້ກ່າວໄວ້ - ແຕ່ເຮັດສິ່ງກົງກັນຂ້າມ ລາວເລືອກທີ່ຈະເບິ່ງເຫັນແຕ່ຂໍ້ບົກພ່ອງ ແລະ ປິດຫູປິດຕາຕໍ່ກັບຄຸນງາມຄວາມດີ -, ແນ່ນອນວ່າລາວຈະຕ້ອງມີຄວາມວິຕົກກັງວົນ, ແລະ ແນ່ນອນວ່າຄວາມຮັກທີ່ມີລະຫວ່າງລາວ ແລະ ຜູ້ທີ່ລາວມີປະຕິສຳພັນນຳນັ້ນຈະຕ້ອງຂຸ່ນມອງ, ແລະ ສິດທິຫຼາຍໆ ຢ່າງທີ່ຕ່າງຝ່າຍຕ່າງຕ້ອງຮັກສານັ້ນກໍຈະຂາດສະບັ້ນລົງ.

ແລະ ມີຜູ້ຄົນຈຳນວນຫຼາຍທີ່ມີຈິດໃຈສູງສົ່ງ ຈະຝຶກຝົນຈິດໃຈຂອງຕົນໃຫ້ມີຄວາມອົດທົນ ແລະ ຄວາມສະຫງົບນິ່ງຂອງຈິດໃຈ ເມື່ອປະສົບກັບໄພພິບັດ ແລະ ຄວາມທຸກຍາກລຳບາກ. ແຕ່ເມື່ອປະເຊີນກັບເລື່ອງເລັກນ້ອຍທີ່ບໍ່ສຳຄັນ ພວກເຂົາກໍ່ວິຕົກກັງວົນ, ແລະ ຄວາມສະຫງົບນິ່ງໃນຈິດໃຈກໍຖືກລົບກວນ. ສາເຫດກໍຍ້ອນ ພວກເຂົາໄດ້ຕຽມຈິດໃຈຂອງຕົນເພື່ອຮັບມືກັບເລື່ອງໃຫຍ່ໆ, ແຕ່ກັບລະເລີຍໃນເລື່ອງເລັກ ໆ ນ້ອຍໆ ຈຶ່ງສົ່ງຜົນເສຍ ແລະ ກະທົບຕໍ່ຄວາມສະຫງົບສຸກຂອງພວກເຂົາ. ສະນັ້ນ ຜູ້ທີ່ມີຄວາມຮອບຄອບຈະກຽມຈິດໃຈຂອງຕົນເພື່ອຮັບມືກັບ ທັງເລື່ອງເລັກນ້ອຍ ແລະ ເລື່ອງໃຫຍ່ ພ້ອມທັງດຸອາຂໍຄວາມຊ່ວຍເຫຼືອຈາກພຣະເຈົ້າ, ແລະ ຂໍບໍ່ໃຫ້ພຣະອົງມອບໝາຍເຂົາໃຫ້ຢູ່ກັບຕົວເຂົາເອງແມ້ພຽງ ຊົ່ວພິບຕາດຽວ. ເມື່ອນັ້ນ

ເລື່ອງເລັກນ້ອຍກໍຈະກາຍເປັນເລື່ອງງ່າຍດາຍສຳລັບເຂົາ ເຊັ່ນດຽວກັບທີ່ເລື່ອງໃຫຍ່ໄດ້ກາຍເປັນເລື່ອງງ່າຍດາຍ. ແລະ ຍັງຄົງມີຈິດໃຈ ແລະ ຫົວໃຈທີ່ສະຫງົບສຸກ ສະບາຍໃຈ.

## ບົດຮຽນ :

## ການບໍ່ປ່ອຍຕົວປ່ອຍໃຈໄປຕາມຄວາມວິຕົກກັງວົນ

ຜູ້ມີສະຕິປັນຍາຍ່ອມຮູ້ວ່າ ຊີວິດທີ່ຖືກຕ້ອງຂອງລາວນັ້ນຄືຊີວິດແຫ່ງຄວາມສຸກ ແລະ ຄວາມສະຫງົບສະບາຍໃຈ ແລະ ມັນກໍສັ້ນຍິ່ງນັກ, ສະນັ້ນ ລາວບໍ່ຄວນທີ່ຈະເຮັດໃຫ້ມັນສັ້ນລົງດ້ວຍຄວາມກັງວົນ ແລະ ການປ່ອຍຕົວໄປກັບຄວາມທຸກໂສກ ເພາະສິ່ງນັ້ນມັນກົງກັນຂ້າມກັບຊີວິດທີ່ຖືກຕ້ອງ. ລາວຈຶ່ງຫວງແຫນຊີວິດຂອງລາວ ບໍ່ໃຫ້ສ່ວນໃຫຍ່ຂອງມັນສູນເສຍໄປ ເປັນເຫຍື່ອຂອງຄວາມກັງວົນ ແລະ ຄວາມທຸກໂສກ. ໃນເລື່ອງນີ້ບໍ່ມີຄວາມແຕກຕ່າງກັນລະຫວ່າງຜູ້ທີ່ເປັນຄົນດີ ແລະ ຜູ້ທີ່ເປັນຄົນຊົ່ວ, ແຕ່ທະວ່າຜູ້ສັດທານັ້ນ ຍ່ອມເປັນຜູ້ທີ່ໄດ້ຮັບຄຸນລັກສະນະນີ້ຢ່າງສົມບູນທີ່ສຸດ ເຊິ່ງເປັນສ່ວນແບ່ງທີ່ໃຫຍ່ຫຼວງ ແລະ ມີປະໂຫຍດທັງໃນໂລກນີ້ ແລະ ໂລກໜ້າ.

ການປຽບທຽບລະຫວ່າງຄວາມໂປດປານຂອງອັລລໍຫ໌ ກັບ ຄວາມທຸກຍາກທີ່ປະສົບກັບລາວ, ແລະ ສົມຄວນຢ່າງຍິ່ງ ເມື່ອສິ່ງທີ່ບໍ່ເພິ່ງປາດຖະໜາເກີດຂຶ້ນກັບລາວ ຫຼື ຢ້ານກົວຕໍ່ມັນ ໃຫ້ລາວປຽບທຽບລະຫວ່າງຄວາມໂປດປານອື່ນໆ

ທີ່ລາວໄດ້ຮັບ ບໍ່ວ່າຈະເປັນທາງດ້ານສາສະໜາ ຫຼື ທາງໂລກ, ກັບສິ່ງທີ່ບໍ່ເພິ່ງປາດຖະໜາທີ່ເກີດຂຶ້ນກັບລາວ.
ເມື່ອປຽບທຽບກັນແລ້ວ ຈະເຫັນໄດ້ຢ່າງຊັດເຈນເຖິງຄວາມໂປດປານອັນຫຼວງຫຼາຍທີ່ລາວມີຢູ່ ແລະ ຄວາມບໍ່ສຳຄັນຂອງສິ່ງທີ່ບໍ່ເພິ່ງປາດຖະໜາທີ່ເກີດຂຶ້ນກັບລາວ.

ແລະເຊັ່ນດຽວກັນ ລາວຈະປຽບທຽບລະຫວ່າງສິ່ງທີ່ລາວຫວາດກົວວ່າຈະເກີດອັນຕະລາຍຂຶ້ນກັບລາວ, ກັບຄວາມເປັນໄປໄດ້ທັງຫຼາຍທີ່ຈະປອດໄພຈາກມັນ. ລາວຈະບໍ່ປ່ອຍໃຫ້ຄວາມເປັນໄປໄດ້ທີ່ອ່ອນແອມາຄອບງຳຄວາມເປັນໄປໄດ້ທີ່ຫຼາຍກວ່າ ແລະ ມີກຳລັງກວ່າ. ດ້ວຍເຫດນັ້ນ ຄວາມວິຕົກກັງວົນ ແລະ ຄວາມຫວາດກົວຂອງລາວກໍ່ຈະໝົດໄປ, ແລະ ລາວຈະປະເມີນເຖິງຄວາມເປັນໄປໄດ້ທີ່ຮ້າຍແຮງທີ່ສຸດທີ່ອາດຈະປະສົບກັບລາວ, ໂດຍການກະກຽມຈິດໃຈຂອງຕົນເອງເພື່ອຮັບມືກັບມັນຫາກມັນເກີດຂຶ້ນ, ແລະ ພະຍາຍາມທີ່ຈະປ້ອງກັນສິ່ງທີ່ຍັງບໍ່ທັນເກີດຂຶ້ນ ແລະ ແກ້ໄຂ ຫຼື ບັນເທົາສິ່ງທີ່ໄດ້ເກີດຂຶ້ນແລ້ວ.

ການສ້າງຄວາມເດືອດຮ້ອນໃຫ້ຜູ້ອື່ນນັ້ນ ເປັນບາບ ແລະ ມັນຈະຍ້ອນກັບມາຫາພວກເຂົາ, ຕາບໃດທີ່ທ່ານບໍ່ໄດ້ຫຍຸ້ງກ່ຽວກັບມັນ, ແລະ ສ່ວນໜຶ່ງຂອງເລື່ອງທີ່ເປັນປະໂຫຍດຄື ທ່ານຄວນຮູ້ວ່າ

ການທີ່ຜູ້ຄົນສ້າງຄວາມເດືອດຮ້ອນໃຫ້ແກ່ທ່ານ, ໂດຍສະເພາະແມ່ນຄຳເວົ້າທີ່ບໍ່ດີ, ມັນບໍ່ໄດ້ສ້າງອັນຕະລາຍແກ່ທ່ານ ແຕ່ຈະສ້າງອັນຕະລາຍແກ່ພວກເຂົາເອງ, ຍົກເວັ້ນແຕ່ທ່ານຈະເອົາຕົວເອງໄປໝົກໝຸ້ນຢູ່ກັບມັນ ແລະ ປ່ອຍໃຫ້ມັນເຂົ້າມາຄອບງຳຄວາມຮູ້ສຶກຂອງທ່ານ, ເມື່ອເປັນເຊັ່ນນັ້ນ ມັນກໍ່ຈະສ້າງອັນຕະລາຍແກ່ທ່ານ ເຊັ່ນດຽວກັບທີ່ມັນສ້າງອັນຕະລາຍແກ່ພວກເຂົາ, ແຕ່ຖ້າຫາກທ່ານບໍ່ໃສ່ໃຈມັນເລີຍ ມັນກໍ່ຈະບໍ່ສາມາດສ້າງອັນຕະລາຍໃດໆ ແກ່ທ່ານໄດ້.

ຈົ່ງໃຊ້ຊີວິດໃຫ້ດີງາມ ດ້ວຍແນວຄິດທີ່ສ້າງສັນເກີດປະໂຫຍດ, ແລະ ຈົ່ງຮູ້ໄວ້ເຖີດວ່າ ຊີວິດຂອງເຈົ້ານັ້ນເປັນໄປຕາມແນວຄິດຂອງເຈົ້າ, ຖ້າຫາກແນວຄິດນັ້ນເປັນສິ່ງທີ່ນຳຜົນປະໂຫຍດມາໃຫ້ແກ່ເຈົ້າທັງໃນເລື່ອງສາສະໜາ ຫຼື ໂລກນີ້ ຊີວິດຂອງເຈົ້າກໍຈະດີງາມ ແລະ ມີຄວາມສຸກ, ແລະຖ້າບໍ່ເປັນເຊັ່ນນັ້ນ ຜົນກໍຈະກົງກັນຂ້າມ.

ການປະກອບການງານປະຕິບັດເພື່ອອັລລໍຫ໌ ບໍ່ແມ່ນເພື່ອສິ່ງທີ່ຖືກສ້າງ. ໜຶ່ງໃນວິທີການກຳຈັດຄວາມກັງວົນທີ່ມີປະສິດທິພາບທີ່ສຸດ ຄືການຕັ້ງໝັ້ນກັບຕົນເອງວ່າຈະບໍ່ຫວັງຄຳຂອບໃຈຈາກຜູ້ໃດ ນອກຈາກອັລລໍຫ໌ເທົ່ານັ້ນ. ດັ່ງນັ້ນ ເມື່ອທ່ານໄດ້ເຮັດຄວາມດີຕໍ່ຜູ້ທີ່ມີສິດເໜືອຕົນເອງ ຫຼື ແມ້ແຕ່ຜູ້ທີ່ບໍ່ມີສິດເໜືອທ່ານກໍ່ຕາມ, ກໍ່ຈົ່ງຮູ້ໄວ້ວ່າການກະທຳດັ່ງກ່າວແມ່ນການປະຕິບັດລະຫວ່າງ

ທ່ານກັບອັລລໍຫ໌, ສະນັ້ນ ຢ່າໄດ້ໃສ່ໃຈກັບຄຳຂອບໃຈຈາກຜູ້ທີ່ທ່ານໄດ້ເຮັດດີນຳເລີຍ, ດັ່ງທີ່ພຣະອົງຜູ້ຊົງສູງສົ່ງໄດ້ກ່າວໄວ້ກ່ຽວກັບບ່າວຜູ້ຊົງກຽດຂອງພຣະອົງວ່າ:

﴿إِنَّمَا نُطۡعِمُكُمۡ لِوَجۡهِ ٱللَّهِ لَا نُرِيدُ مِنكُمۡ جَزَآءٗ وَلَا شُكُورًا ٩﴾

(ແທ້ຈິງ ພວກເຮົາໃຫ້ອາຫານແກ່ພວກທ່ານກໍ່ເພື່ອຄວາມພໍພຣະໄທຂອງອັລລໍຫ໌, ພວກເຮົາບໍ່ຕ້ອງການການຕອບແທນ ແລະ ທັງບໍ່ຕ້ອງການການຂອບໃຈຈາກພວກທ່ານ) [ສູເຣາະຫ໌ ອັລ-ອິນສານ : 9].

ແລະ ເລື່ອງນີ້ຍິ່ງຄວນໃຫ້ຄວາມສຳຄັນເປັນພິເສດໃນການປະພຶດຕໍ່ຕໍ່ຄອບຄົວ ແລະ ລູກຫຼານ ເນື່ອງຈາກຄວາມສຳພັນອັນໃກ້ຊິດຂອງເຈົ້າກັບພວກເຂົານັ້ນແໜ້ນແຟ້ນຫຼາຍ ດັ່ງນັ້ນເມື່ອເຈົ້າຝຶກໃຈຂອງເຈົ້າໃຫ້ປ່ອຍວາງຄວາມຄິດຮ້າຍຄວາມໂກດຕໍ່ພວກເຂົາໄດ້ ເຈົ້າຈະໄດ້ຮັບທັ້ງຄວາມສະບາຍໃຈສະບາຍກາຍ. ແລະ ຫຼັກສຳຄັນອີກປະການໜຶ່ງຄືການຍຶດໝັ້ນໃນຄຸນນະທຳຄວາມງາມຄວາມດີ ແລະ ປະຕິບັດມັນ ຕາມທີ່ໃຈພ້ອມເຮັດໄດ້ ໂດຍບໍ່ຝືນ ຫຼື ເສແສ້ງ ເພາະຄວາມຝືນນັ້ນຈະເຮັດໃຫ້ເຈົ້າບໍ່ສະຫງົບໃຈ ແລະ ກັບກາຍເປັນຫຼຸດໄປຈາກຄຸນນະທຳທີ່ແທ້ຈິງ ເນື່ອງຈາກເຈົ້າເດີນໃນທາງທີ່ບິດເບື້ອນ. ນີ້ແຫລະຄື "ຄວາມມີປັນຍາ" — ຄືການເຮັດໃຫ້ເລື່ອງທີ່ຂົມຂື່ນ ຫຼື ບໍ່ດີກາຍເປັນເລື່ອງທີ່ໃສສະອາດ ແລະ ຫວານຊື່ນ, ດ້ວຍວິທີນີ້

ຄວາມສຸກກໍ່ຈະຍິ່ງບໍລິສຸດຂຶ້ນ ແລະ ຄວາມຂຸ່ນມົວທັ້ງຫຼາຍກໍ່ຈະໝົດສິ້ນໄປ.

ການຫຍຸ້ງຢູ່ກັບສິ່ງທີ່ເປັນປະໂຫຍດ ແລະ ລະເວັ້ນຈາກສິ່ງທີ່ເປັນໂທດ, ຈົ່ງມຸ່ງໝັ້ນກັບສິ່ງຂອງທີ່ເກີດປະໂຫຍດ ແລະ ປະຕິບັດເພື່ອໃຫ້ບັນລຸຜົນ, ແລະ ຢ່າຫັນເຫໄປສົນໃຈເລື່ອງທີ່ເປັນຜົດໄພອັນຕະລາຍ; ເພື່ອຫັນເຫຄວາມສົນໃຈອອກຈາກສາເຫດທີ່ນໍາມາເຊິ່ງຄວາມວິຕົກກັງວົນ ແລະ ຄວາມໂສກເສົ້າ, ແລະ ຈົ່ງຂໍຄວາມຊ່ວຍເຫຼືອດ້ວຍການພັກຜ່ອນ ແລະ ການລວບລວມຈິດໃຈໃນການງານທີ່ສໍາຄັນ.

ຕັດສິນໃຈເຮັດການງານໃນທັນທີ, ແລະ ສ່ວນໜຶ່ງຂອງສິ່ງທີ່ເປັນປະໂຫຍດກໍຄື ການຕັດສິນໃຈເຮັດວຽກງານໃຫ້ສໍາເລັດໂດຍທັນທີ ແລະ ການກຽມພ້ອມສໍາລັບອະນາຄົດ; ເພາະຖ້າຫາກວຽກງານຕ່າງໆ ບໍ່ຖືກຕັດສິນໃຈເຮັດໃຫ້ສໍາເລັດ, ກໍ່ຈະມີວຽກເກົ່າທີ່ຍັງຄ້າງຢູ່ກໍຈະມາທັບຖົມ, ແລະ ຈະຖືກເພີ່ມດ້ວຍວຽກໃໝ່ໃນອະນາຄົດ, ເຊິ່ງຈະເຮັດໃຫ້ພາລະກໍຈະຍິ່ງໜັກໜ່ວງຂຶ້ນ. ດັ່ງນັ້ນ ຖ້າຫາກເຮົາເຮັດທຸກຢ່າງໃຫ້ສໍາເລັດຕາມເວລາຂອງມັນ, ເຮົາກໍຈະສາມາດປະເຊີນໜ້າກັບວຽກງານໃນອະນາຄົດໄດ້ດ້ວຍກໍາລັງແຫ່ງຄວາມຄິດ ແລະ ກໍາລັງແຫ່ງການລົງມືເຮັດ.

ການຈັດລໍາດັບຄວາມສໍາຄັນ ດ້ວຍການປຶກສາຫາລື, ແລະ ຄວນເລືອກສັນກິດຈະການງານທີ່ເປັນປະໂຫຍດ ໂດຍເລີ່ມຈາກສິ່ງທີ່ສໍາຄັນທີ່ສຸດໄປສູ່ສິ່ງທີ່ສໍາຄັນຮອງລົງມາ ແລະ ແຍກແຍະລະຫວ່າງສິ່ງທີ່ໃຈຂອງເຈົ້າໂນ້ມອຽງໄປຫາ ແລະ ມີຄວາມປາດຖະນາຢ່າງແຮງກ້າໃນສິ່ງນັ້ນ ເພາະສິ່ງທີ່ກົງຄັນຂ້າມຈະນໍາມາເຊິ່ງຄວາມເບື່ອຫນາຍ ຄວາມເຊັງ ແລະ ຄວາມມືດມອງ.ຈົ່ງຂໍຄວາມຊ່ວຍເຫຼືອໃນເລື່ອງນີ້ດ້ວຍຄວາມ ຄິດທີ່ຖືກຕ້ອງ ແລະ ການປຶກສາຫາລື ເພາະບໍ່ມີຜູ້ໃດເສຍໃຈຈາກການປຶກສາຫາລື ແລະ ຈົ່ງສຶກສາເຖິງສິ່ງທີ່ຕ້ອງການຈະເຮັດຢ່າງລະອຽດຮອບຄອບ ເມື່ອເຈົ້າແນ່ໃຈໃນຜົນປະໂຫຍດທີ່ໄດ້ ແລະ ຕັດສິນໃຈແລ້ວ ກໍ່ຈົ່ງມອບຫມາຍຕົນເອງ ຕໍ່ອັລລໍຫ໌ ແທ້ຈິງອັລລໍຫ໌ຊົງຮັກບັນດາຜູ້ມອບຫມາຍ

ແລະ ມວນການສັນລະເສີນທັ້ງຫຼາຍເປັນສິດຂອງອັລລໍຫ໌ ພຣະເຈົ້າແຫ່ງສາກົນລະໂລກ.

ຂໍອັລລໍຫ໌ ຊົງປະທານຄວາມສັນຕິຈໍາເລີນແດ່ທ່ານນະບີ ມຸຮໍາມັດ ຂອງພວກເຮົາ ແດ່ຄອບຄົວຂອງທ່ານ ແລະ ມິດສະຫາຍຂອງທ່ານ.

❋❋❋

# الفهرس


ແນວທາງທີ່ເປັນປະໂຫຍດເພື່ອຊີວິດແຫ່ງຄວາມຜາສຸກ.................... 2

ຂຽນໂດຍ.............................................................................. 2

ທ່ານອາຈານ ອັບດຸຣເຣາະຫ໌ມານ ບິນ ນາເຊັຣ ອັສ-ສະອູດີ (ຂໍພຣະອົງຊົງເມດຕາທ່ານ) ................................................................. 2

ບົດນໍາ .................................................................................. 2

ບົດຮຽນ: ການສັດທາ ແລະ ການກະທໍາຄວາມດີງາມ ......................... 4

ບົດຮຽນ : ວ່າດ້ວຍການເອົາໃຈໃສ່ໃນການງານ ຫຼື ສາດຄວາມຮູ້ທີ່ມີປະໂຫຍດ............................................................... 14

ບົດຮຽນ : ການລໍາລຶກເຖິງອັລລໍຫ໌ໃຫ້ຫຼາຍໆ ..................................... 18

ບົດຮຽນ : ການສະແຫວງຫາວິທີຂະຈັດ ສາເຫດທີ່ເຮັດໃຫ້ເກີດຄວາມທຸກໂສກ, ແລະ ສ້າງສາເຫດທີ່ນໍາມາເຊິ່ງຄວາມສຸກ................................................... 21

ບົດຮຽນ : ວ່າດ້ວຍການປະເມີນສະຖານະການທີ່ຊົ່ວຮ້າຍ.................. 24

ບົດຮຽນ : ຄວາມເຂັ້ມແຂງຂອງຈິດໃຈ, ການບໍ່ຫວັ່ນໄຫວ ແລະ ບໍ່ຄ້ອຍຕາມອາລົມໃຝ່ຕໍ່າ. ........................................................................ 25

ບົດຮຽນ : ວ່າດ້ວຍການກຽມຈິດໃຈເພື່ອການອົດທົນຕໍ່ຂໍ້ບົກພ່ອງຂອງຜູ້ອື່ນ....... 28

ບົດຮຽນ : ການບໍ່ປ່ອຍຕົວປ່ອຍໃຈໄປຕາມຄວາມວິຕົກກັງວົນ ...... 31


❋❋❋

حرمين

رئاسة الشؤون الدينية
بالمسجد الحرام والمسجد النبوي

# رسالة الحرمين

# Message of The Two Holy Mosques

Guidance content for the visitors of the Holy Mosque and the Prophet's Mosque in languages.